

# “ ສີວົງສາຊຸນຊະນະປັນຍານຸສອນ “

ເນື່ອງໃນງານຊາປະນະກິດສົບ

## ຍາພໍ່ເຖົ້າຈານຊາທອງດີ ສີວົງສາຊຸນຊະນະປັນຍາ

ບ້ານອຸທຸມໃຫມ່ ເມືອງ ສຸຂຸມາ ແຂວງຈຳປາສັກ

ຊາຕະ ວັນສຸກ ມີນາ 1902 - 2445

ມໍຣະນະ ວັນພຸດ ພະຈິກ 1999 - 2542

( ຫນຶ່ງສະຕະວັດ )

ຈັດທຳໂດຍ

**ພຣະຊາຍຄຳ ຈຳປາອຸທຸມ**

ຄ. ສ. 2000



# ສິວົງສາຊຸນຊະນະປັນຍານຸສອນ

ເນື່ອງໃນງານຊາປະນະກິດສົບ

## ຍາພໍ່ເຖົ້າຈານຊາທອງດີ ສິວົງສາຊຸນຊະນະປັນຍາ

**ບ້ານອຸທຸມໃຫມ່ ເມືອງ ສຸຂຸມາ ແຂວງຈຳປາສັກ**

**ຊາຕະ ວັນສຸກ ມີນາ 1902 - 2445**

**ມໍຣະນະ ວັນພຸດ ພະຈິກ 1999 - 2542**

**( ຫນຶ່ງສະຕະວັດ )**

ຈັດທຳໂດຍ

## ພຣະຊາຍຄຳ ຈຳປາອຸທຸມ

ຄ. ສ. 2000

# ຊີວະປະຫວັດຫຍໍ້

ຂອງ

## ຍາພໍ່ເຖົ້າຈານຊາທອງດີ ສີວົງສາຊຸນຊະນະປັນຍາ

ບ. ອຸທຸມໃຫມ່ ມ. ສຸຂຸມາ ຂ. ຈຳປາສັກ

ຊາຕະ ວັນສຸກ ມື້ເພັງ ເດືອນສາມ ພ. ສ 2445 ເດືອນ ມີນາ

ຄ. ສ 1902

ມໍຣະນະ ວັນພຸດ ແຮມ 9 ຄ່ຳ ເດືອນ 11 ພ.ສ 2542 ວັນທີ 3

ເດືອນ ພະຈິກ ຄ.ສ 1999.

# ສາລະບານ


| ບົດ | ໜ້າ |
|---|---|
| 1. ໜ້າປົກ | |
| 2. ຮູບ | |
| 3. ປະຫວັດຫຍໍ້ | |
| 4. ຄຳປາລົບ | 1 |
| 5. ຄຳອະນຸໂມທະນາກະຖາຂອງປະທານສົງ | 3 |
| 6. ຊີວະປະຫວັດ | 5 |
| 7. ຄຳໄວ້ອາໄລຕ່າງ ໆ | 11 |
| 8. ຄະຕິພຸດທະທັມ | 21 |

# ຄຳປາລົບ

ປູ່ຈານທອງ ເປັນຜູ້ເຖົ້າ ຜູ້ແກ່ຫລັກບ້ານ ຫລັກເມືອງ ເປັນນັກປາດຊາວບ້ານ ເປັນຫມໍຢາພື້ນເມືອງ ເປັນຜູ້ມີສັດທາແກ່ກ້າຕໍ່ພຣະພຸດທະສາສະຫນາ ທີ່ຊາວບ້ານ ລູກຫລານ ແລະ ຍາດພີ່ນ້ອງບ້ານອຸທຸມໃຫມ່ ອຸທຸມເກົ່າ ກໍຄື ບ້ານໃກ້ເຮືອນຄຽງໃຫ້ຄວາມເຄົາລົບນັບຖືຮັກແພງຢ່າງຍິ່ງ, ຄຸນສົມບັດ, ຄຸນຄວາມດີ ສົນທຳປະຈຳໃຈ ທີ່ສະທ້ອນອອກເປັນຜົນງານ ຝັງເລິກ ຢູ່ໃນຄວາມຊົງຈຳ ແລະ ເຫລືອໄວ້ເປັນອະນຸສອນ ໃນຈິດໃຈຂອງລູກ ຫລານ ຜູ້ຢູ່ພາຍຫລັງ.

ດັ່ງນັ້ນ, ເມື່ອປູ່ໄດ້ຈາກພວກເຮົາໄປ ປະໄວ້ແຕ່ຄຸນຄວາມດີ ໃຫ້ພວກເຮົາໄດ້ຊື່ນຊົມ ຖືເອົາເປັນແບບຢ່າງ ໃນການດຳເນີນຊີວິດບົນເສັ້ນທາງທີ່ຖືກຕ້ອງຕາມຮ່ອງຮອຍ ທີ່ປູ່ເຄີຍເດີນມາແລ້ວຫນຶ່ງສະຕະວັດ.

ພວກເຮົາລູກຫລານ ຍາດພີ່ນ້ອງທັງຫລາຍໄດ້ພາກັນຕອບບຸນ ແທນຄຸນ ຂອງປູ່ດ້ວຍການທຳຊາປະນະກິດ ອຸທິດບຸນກຸສົນໄປຫາດວງວິນຍານຂອງເພິ່ນນັ້ນກໍເປັນສິ່ງທີ່ດີແລ້ວ, ແຕ່ວ່າມັນຍັງບໍ່ແຜ່ໄພສານໄປເຫມືອນການຈົດຈຳທຳອະນຸສອນຈາຣຶກເປັນ

ຫນັງສືໄວ້ໃຫ້ລູກຫລານ ໄດ້ອ່ານ ໄດ້ສຶກສາ ພໍເປັນບ່ອນຊີ້ທິດ ເບື້ອງທາງ ສຶກສາ ຫາຄວາມຮູ້ຈາກປະຫວັດ ແລະ ຄະຕິທັມ.

ຂ້າພະເຈົ້າຂໍຂອບອີກ ຂອບໃຈ ແລະ ຂໍອະນຸໂມທະນາ ໃນກຸສົນ ຈະຣິຍະ ກັນລະຍານະຈິດ ອັນປະກອບໄປດ້ວຍກະຕັນຍູກະຕະເວທິຕາທັມຂອງທຸກທ່ານ ທີ່ໄດ້ຮ່ວມກັນປະກອບຄຸນຄວາມດີດັ່ງນີ້. ນະໂອກາດນີ້ ຂໍອຳນາດແຫ່ງກຸສົນ ຈະຣິຍາທີ່ທຸກ ໆ ທ່ານຜູ້ເຄົາຣົບສັກກາຣະໄດ້ຮ່ວມກັນບຳເພັນນີ້ ຈົ່ງໄດ້ອຳນວຍອິດຖະວິບູນມະນູນພູນຜົນແດ່ປູ່ຈານທອງ ໂດຍຄວນແກ່ຄະຕິວິໃສ ໃນສຳປາຍະພົບທຸກປະການ.

ຂໍຕັ້ງກັນລະຍານະຈິດອາຣາດທະນາຄຸນພຣະສີຣັດຕະນະໄຕຣ ແລະ ປາຣະມີທັມຂອງປູ່ຈານ ທີ່ໄດ້ປະຕິບັດມາ ຂໍໄດ້ໂປດອະພິບານຄຸ້ມຄອງຮັກສາທ່ານທັງຫລາຍ ມີກຸສົນ ບຸນຣາສີສະຫວັດດີມົງຄົນມາສູ່ຕົນ ເປັນສຳມາທິດຖິ ມີຄວາມຮົ່ມເຢັນເປັນສຸກທຸກທິພາຣາຕີການ ຈະເຣີນງອກງາມໄພບູນໃນທັມຂອງອົງສົມເດັດພຣະສຳມາສຳພຸດທະເຈົ້າຕລອດກາລະນານເທີ້ນ.

ຂໍອະນຸໂມທະນາສາທຸການຜູ້ຈັດທຳຫນັງສືອະນຸສອນ
ວັດພຣະທາດຫລວງເຫນືອ ນະຄອນຫລວງວຽງຈັນ.

ພຣະຊາຍຄຳ ຈຳປາວຸທຸມ.

2 ທັນວາ 1999.

## ຄຳອະນຸໂມທະນາກະຖາ
## ຂອງປະທານສູນກາງອົງການພຸດທະສາສະໜາສຳພັນລາວ.

ຄົນຜູ້ໜຶ່ງ ຈະເປັນຫລືຕາຍກໍບໍ່ສຳຄັນ

ຄວາມສຳຄັນ ຄື ຊີວິດຂອງບຸກຄົນນັ້ນມີຄຸນຄ່າຕໍ່ເພື່ອນມະນຸດຫລື ບໍ່ ? ເພາະຊີວິດຂອງຄົນສາມາດປຽບທຽບໄດ້ກັບການເດີນທາງ ຍ່ອມພົບກັບອຸປະສັກ ຄື ຄວາມຜິດຫວັງ ແລະ ສົມຫວັງ ຈະຫາຊີ ວິດໃດສຸກສົມຫວັງດັ່ງຄວາມຕ້ອງການຂອງຕົນເຕັມຮ້ອຍເປີເຊັນ ຄົງເປັນໄປບໍ່ໄດ້ເຊັ່ນດຽວກັບຄວາມຊົ່ວ ແລະ ຄວາມດີ.

ໃນພື້ນພິພົບປະຖະພີນີ້ມີຄວາມຍຸດຕິທຳໃຫ້ຄົນເລືອກຢູ່ສອງ ທາງ ຄືຄວາມຊົ່ວ ແລະ ຄວາມດີ, ຕ່າງແຕ່ວ່າເຮົາຈະຮູ້ຈັກຄວາມ ດີ ແລະ ຄວາມຊົ່ວພຽງພໍຫລື ບໍ່ ? ຊີວິດ ເປັນສິ່ງທີ່ຄົນເຮົາຫວງ ແຫນທີ່ສຸດ ເພາະວ່າເຮົາມີຊີວິດຢູ່ໄດ້ ພຽງແຕ່ຄັ້ງດຽວເທົ່ານັ້ນ.

ຊີວິດ ຂອງປູ່ຈານທອງ ແລະຄຸນນະທຳໃນຕົວຂອງເພິ່ນນັ້ນ ເປັນສິ່ງທີ່ຫາຍາກ ເພາະອຸດົມໄປດ້ວຍຄຸນນະທຳ ຄື ພົມວິຫານ ແລະ ສຳມາຊີບເປັນຫລັກ. ປູ່ຈານທອງມີຄວາມສຸຂຸມ ຮອບຄອບ, ມີ ຄວາມສະຫລາດ ສະຫລຽວ ມີປັນຍາ ພົບໄຫວເປັນເລີດ ຈະເຫັນ ໄດ້ຈາກການດຳລົງຊີວິດຂອງເພິ່ນ ຍຶດຖືໃນຫລັກຄຳສອນ, ມີການ

ໄຫວ້ພຣະພາວັນນາ, ໃຫ້ທານ - ອະໄພທານ ແລະ ສັງຄະທານ.

ໃນເມື່ອການເດີນທາງຊີວິດຂອງເພິ່ນເຖິງວາລະສຸດທ້າຍ ຄື ຄວາມຕາຍຂອງເພິ່ນລູກຫລານກໍພໍໃຈ ເພາະເພິ່ນຈົບຊີວິດລົງດ້ວຍ ກິດເກນຂອງທຳມະຊາດຄື ຕາຍດີ, ຕາຍດ້ວຍໂລກຊະລາ ອາຍຸຕັ້ງ ຮ້ອຍປີ.

ນັບວ່າຊີວິດຂອງເພິ່ນເປັນແບບຢ່າງທີ່ດີ ໃຫ້ແກ່ລູກ ຫລານຍາດມິດ ຜູ້ຕ້ອງການຄວາມດີ ຈະໄດ້ເດີນຕາມທາງທີ່ເພິ່ນ ໄດ້ເຄີຍເດີນມາແລ້ວ.

ດັ່ງນັ້ນ, ເນື່ອງໃນງານຊາປະນາກິດສົບຂອງປູ່ຈານທອງຄັ້ງ ນີ້, ຈຶ່ງໄດ້ມີການຈັດທຳອານຸສອນ ເພື່ອເຜີຍແຜ່ກຽດຕິຄຸນ ຄືຄວາມ ດີໃຫ້ແຜ່ໄພສານ. ຂ້າພະເຈົ້າຂໍອະນຸໂມທະນາຕໍ່ຜູ້ຈັດທຳຄື ພຣະ ຊາຍຄຳ ຈຳປາອຸທຸມ ໄວ້ນະໂອກາດນີ້ດ້ວຍ.

ຂໍອຳນາດກຸສົນທັກສິນານຸປະທານ ທີ່ບັນດາຍາດມິດ ລູກ ຫລານຜູ້ເຄົາລົບນັບຖື ແລະ ສິດຍານຸສິດ ຂອງປູ່ຈານທອງ ທີ່ໄດ້ ບຳເພັນບຸນມາຕັ້ງແຕ່ຕົ້ນຈົນເຖິງປັດຈຸບັນ ຈົ່ງເປັນພະລະວະປັດໃຈ ອຳນວຍອິດຖະວິບູນມະນຸນຜົນປູ່ຈານທອງ ໃນສຳປະຣາຍະພົບ ສົມເຈຕະນາອຸທິດທຸກປະການເຖີດ.

ວັດພຣະທາດຫລວງເໜືອ.
ວັນທີ 26 ມັງກອນ 2000.
ພຣະມະຫາວິຈິດ ສິງຫາຣາຊ.

# ຊີວະປະຫວັດ

# ຍາພໍ່ເຖົ້າຈານຊາຫອງດີ ສີວົງສາຊຸນຊະນະປັນຍາ

ຊາຕະ ເມື່ອວັນສຸກ ມື້ເພັງ ເດືອນ ສາມ ພ.ສ. 2445, ຄ.ສ. 1902 ທີ່ບ້ານອຸທຸມເກົ່າ ຕາແສງອຸທຸມ ເມືອງ ອຸທຸມ ນະຄອນຈໍາປາສັກ ( ເມືອງ ສຸຂຸມາ ແຂວງ ຈໍາປາສັກປັດຈຸບັນ ).

ຊື່ບິດາ ທ້າວ ບຸນເພັງ ( ບ້ານທາດດອນ ໄຊຍ້າຍມາຢູ່ອຸທຸມເກົ່າ ).

ຊື່ມານດາ ນາງ ບຸນມີ ( ບ້ານໜອງບົວ ຍ້າຍມາຢູ່ ອຸທຸມເກົ່າ ).

ມີອ້າຍນ້ອງຮ່ວມກັນ 4 ຄົນຄື :

1. ທ້າວ ຄໍາໃບ ( ຕາຍເມື່ອອາຍຸໄດ້ 6 ປີ )
2. ຍາພໍ່ເຖົ້າຈານຊາຫອງດີ
3. ນາງສັດຕີ
4. ນາງກຸນີ

ປີພ.ສ. 2453, ຄ.ສ. 1910 ເມື່ອອາຍຸໄດ້ 9 ປີ , ຜູ້ເປັນບິດາກໍໄດ້ເຖິງແກ່ກຳຈາກໄປ. ພາລະໃນການລ້ຽງດູເບິ່ງແຍງອົບຮົມສັ່ງສອນ ບຸດທິດາ ຈຶ່ງຕົກເປັນຂອງມານດາ ແຕ່ພຽງຜູ້ດຽວ.

ປີ ພ.ສ. 2456 - ຄ.ສ. 1913 ເມື່ອອາຍຸໄດ້ 12 ປີ ກໍໄດ້ບັນພະຊາເປັນສຳມະເນນ ໂດຍມີພຣະອາຈານອ່ອນ ເປັນຜູ້ອຸປັດຊາບວດໃຫ້. ບວດທີ່ວັດເທພະທິດາຣາມ ບ້ານອຸທຸມໃຫມ່, ເມືອງສຸຂຸມາ ນະຄອນຈຳປາສັກ.

ຫລັງຈາກທີ່ບວດມາແລ້ວ ກໍໄດ້ເອົາໃຈໃສ່ຕໍ່ການສຶກສາຮ່ຳຮຽນ ໂດຍມີ ພໍ່ແມ່ ຄູບາ ອາຈານ ໃຫ້ຄຳແນະນຳ ອົບຮົມສັ່ງສອນຊີ້ທິດເຍືອງທາງໃຫ້ເຫັນເຖິງຄວາມກ້າວຫນ້າປະກອບ ກັບຜູ້ກ່ຽວເອງມັກ ແລະ ໄຝ່ຝັນໃນທາງດ້ານການສຶກສາຢູ່ແລ້ວ, ດັ່ງນັ້ນຈຶ່ງໄດ້ຕັດສິນໃຈໄປຮຽນຢູ່ເມືອງນະຄອນຈຳປາສັກ ໂດຍໄດ້ພັກຢູ່ວັດເມືອງແສນ ມີພຣະອາຈານຄຣູພູມມາ ເປັນພຣະອາຈານ ໃຫ້ການອົບຮົມ ສັ່ງສອນຢູ່ເປັນເວລາ 7 ປີ. ເຫັນວ່າມີຄວາມຮູ້ຄວາມສາມາດພໍໃຊ້ໄດ້ ກ້າວຫນ້າພໍສົມຄວນ ມີຄວາມສະຫລາດປາດເປື່ອງເປັນທີ່ພໍອົກ ພໍໃຈຂອງຄູບາອາຈານ ສຳມະເນນ ທອງດີ ຈຶ່ງກາບລາ ຄຣູບາ ອາຈານ ກັບຄືນພູມລຳເນົາເດີມຄືກັບ ຄືນມາພັກຈຳພັນສາ ຢູ່ວັດບ້ານຫມາກມີ້ ດອນໄຊ ເປັນເວລາ 2 ປີ ຈຶ່ງໄດ້ຍ້າຍ

ມາຢູ່ວັດ ສີບຸນເຮືອງບ້ານອຸທຸມເກົ່າ ເປັນເວລາ 1 ປີ.

ເມື່ອມາພັກຢູ່ວັດສີບຸນເຮືອງ ວັດອຸທຸມເກົ່ານີ້ ຈຶ່ງໄດ້ໃກ້ຊິດກັບຄອບຄົວ ເກີດຄວາມອິດູ ສົງສານ ເວດທະນາມານດາຜູ້ບັງເກີດເກົ້າ ທີ່ເຖົ້າແກ່ຊະລາແຮງແລ້ວ. ເພື່ອຕອບບຸນ ແທນຄຸນ ຜູ້ມີພະຄຸນ ເພິ່ນຈຶ່ງໄດ້ຕັດສິນໃຈຄອບລາພຣະອຸປັດຊາອາຈານສິກ. ຝ່າຍພຣະອຸປັດຊາອາຈານກໍມອງເຫັນຄວາມສຳຄັນ ແລະ ຈຳເປັນຕາມເຫດຜົນ ຈຶ່ງໄດ້ອະນຸຍາດສິກໃຫ້. ຮວມເວລາເມື່ອບັນພະຊາເປັນສາມະເນນໄດ້ 10 ປີ ( ພ.ສ 2456 - 2465, ຄ.ສ 1913 - 1922 ).

ປີ ພ.ສ 2467 ຄ.ສ 1924 ເມື່ອເພິ່ນອາຍຸໄດ້ 23 ປີ ເພິ່ນໄດ້ຕັດສິນໃຈເຂົ້າອຸປະສົມບົດ ເປັນພຣະພິກຂຸ ເພື່ອທົດແທນບຸນ ຄຸນ ຂອງບິດາ ມານດາ ທີ່ວັດເທພະທິດາຣາມ ບ້ານອຸທຸມໃໝ່ ໂດຍມີ :

ພຣະຄູຫລວງເດດ ວັດໂພນເຜົ້າສຸຂຸມາ ເປັນພຣະອຸປັດຊາ

ພຣະຄຣູບຸດສີ ເປັນພຣະກຳມະວາຈາຂວາ

ພຣະອາຈານພໍ່ພີລາ ເປັນພຣະກຳມະວາຈາຊ້າຍ

ເມື່ອບວດໄດ້ 5 ພັນສາກົງກັບປີພ.ສ. 2471 ຄ.ສ 1923 ໄດ້ຖືກເຖຣາພິເສກທົດສົງເປັນພຣະສຳເຣັດທອງດີ ແລະ ຍັງໄດ້

ຮັບແຕ່ງຕັ້ງ ຈາກພຣະຫລັກຄຳຈຳປາສັກ ນັກຄະຣາຈານ ( ເຄນ ທະນາກອນ ) ໃຫ້ເປັນພຣະກຳມະວາຈາປະຈຳເຂດອຸທຸມ ແລະ ໄດ້ຮັບແຕ່ງຕັ້ງ ໃຫ້ເປັນພຣະເຈົ້າອະທິການວັດເທພະທິດາຣາມ ບ້ານອຸທຸມໃຫມ່.

ເມື່ອບວດໄດ້ 15 ພັນສາ ຄື ເມື່ອປີ ພ.ສ 2480 ຄ.ສ 1938 ໄດ້ຖືກເຖຣາພິເສກທົດສິງເປັນພຣະຊາທອງດີ. ໃນທ້າຍປີນີ້ເອງ ຈຶ່ງໄດ້ຄອບລາຄຣູອຸປັດຊາອາຈານ ເພື່ອສິກເພາະຫມົດຄວາມ ພາກພຽນໃນເພດສະມະນະ, ຝ່າຍຄຣູອຸປັດຊາອາຈານເຫັນດີ ອະ ນຸຍາດໃຫ້ແລ້ວຈຶ່ງໄດ້ສິກ ເພື່ອໄປປະກອບສ່ວນວຽກງານຝ່າຍ ບ້ານເມືອງຄື ໄດ້ໄປປະກອບອາຊີບ ເປັນນາຍເຮັດໄມ້ສັກ ຂົນຂອງ ຫລວງ ແຕ່ຊຽງແຕງ ທາຫ້ວຍປາກົດເຊກອງ ( ປາກເຊກອງ ແຂວງ ເຊກອງ ປັດຈຸບັນ ) .

ເມື່ອອາຍຸໄດ້ 38 ປີ ກົງກັບປີ ພ.ສ. 2481 ຄ.ສ 1939 ຈຶ່ງ ໄດ້ສົມຣົດແຕ່ງງານ ກັບເຈົ້ານາງ ໄຂ່ແກ້ວ ( ທອງຄູນ ) ທິດາຂອງ ສະເດັດເຈົ້າບົວຄຳ ເຈົ້າຄອງເມືອງອຸທຸມ.

ໄດ້ມີບຸດດ້ວຍກັນຄື ທ້າວບັນດິດ ແລະ ຜູ້ອອກທາງຂະ ຫມ່ອມທາຍຕົວໄປ

ໄດ້ຮັບຣາຊະການເປັນສະຫມຽນຕາແສງອຸທຸມ ຢູ່ເປັນເວ

ລາ 7 ປີ, ໄດ້ເປັນນັກຄະຫາຍົກ ປະຈຳວັດເທພະທິດາຣາມ ບ້ານອຸທຸມໃຫມ່ ຕະຫລອດຊີວິດ.

ເມື່ອປີ ພ.ສ 2516 ຄ.ສ 1973 ພັນຣິຍາ ທີ່ແສນຮັກຂອງເພິ່ນ ກໍໄດ້ເຖິງແກ່ກຳ ຈາກໄປ ເຫລືອໄວ້ແຕ່ຄວາມເສົ້າໂສກ ປ່ຽວພອຍດຽວດາຍ ລູກເຕົ້າທີ່ປຽບເຫມືອນແກ້ວຕາດວງໃຈ ທັງສອງນັ້ນກໍໄດ້ເຖິງແກ່ກຳຕາຍຈາກ ແລະ ຂ່າວຄາວງຽບຫາຍໄປ, ຍິ່ງເຮັດໃຫ້ເພິ່ນເປັນທຸກທໍຣະມານຫລາຍທີ່ສຸດ. ແຕ່ເມື່ອເພິ່ນທວນລະນຶກເຖິງຄວາມບໍ່ທ່ຽງແທ້ແນ່ນອນ ຂອງສັງຂານແລ້ວ ເພິ່ນກໍສາມາດປ່ອຍວາງໄປໄດ້, ແຕ່ທຳມະຊາດຂອງຄົນທຳມະດາຍັງບໍ່ທັນໄດ້ຫລຸດພົ້ນຍ່ອມມີຄວາມຫ່ວງຫາ ອາໄລ ອາວອນ. ເມື່ອປີງສິບພັນຣະຍາຂອງເພິ່ນແລ້ວ ເພິ່ນກໍໄດ້ຢູ່ຄົນດຽວ ຄອງຄວາມເປັນໂສດຢູ່ໄລຍະຫນຶ່ງ ເພິ່ນຈຶ່ງຕັດສິນໃຈຫາຄູ່ຄອງໃຫມ່ ເພື່ອເປັນທີ່ອົບອຸ່ນ ແລະ ເພື່ອນໃຈ ໃນຍາມງຽບເຫງົາ ເປັນທີ່ປຶກສາໃນເວລາທີ່ເສົ້າໃຈ ເຝົ້າຝັເຝົ້າໄຂ້. ໃນທີ່ສຸດ ເພິ່ນຈຶ່ງຕັດສິນໃຈແຕ່ງງານໃຫມ່ຊ້ຳເຖົ້າອີກຄັ້ງກັບແມ່ເຖົ້າການີ, ຜູ້ທີ່ທັງສອງຄົນເພິ່ນເຂົ້າໃຈກັນທີ່ສຸດ ທັງສອງຄົນເພິ່ນຢູ່ຮ່ວມກັນມາດ້ວຍຄວາມເຂົ້າອົກ ເຂົ້າໃຈດ້ວຍຄວາມເຫັນໃຈກັນ.

ວຽກງານໃນປັດສິມະໄວນີ້ ທີ່ເພິ່ນຖືວ່າ ເປັນກິດຈະວັດ ປະ

ຈຳວັນ ທີ່ບໍ່ໄດ້ປ່ອຍປະລະວາງນັ້ນ ກໍຄື ການທຳບຸນ ຕັກບາດຢາດນ້ຳ ທຸກວັນທຳມະດາ ແລະ ວັນພຣະ ວັນສິນບໍ່ໄດ້ຂາດ. ເພິ່ນເປັນທີ່ເພິ່ງພາອາໃສຂອງລູກບ້ານ ຫລານເມືອງ ເປັນຮົ່ມໂພ ຮົ່ມໄຊທີ່ແຜ່ກິ່ງງ່າ ສາຂາກູ້ມກອມລູກຫລານ ບໍ່ວ່າກາງເວັນ ແລະ ກາງຄືນ ເພິ່ນຈະໄຫວ້ພຣະ ພາວັນນາບໍ່ໄດ້ຂາດ ຈິດໃຈ ແລະ ໃບໜ້າຂອງເພິ່ນອີ່ມເອີບໄປດ້ວຍນ້ຳບຸນ ສົມແລ້ວທີ່ເພິ່ນຜ່ານການເວລາເດີນທາງຊີວິດມາຍາວໄກ ເພິ່ນຍ່ອມມີຄວາມເຂົ້າໃຈໃນຄວາມບໍ່ທ່ຽງ ເພາະເພິ່ນກໍແມ່ນຈານຊາ ທີ່ເຄີຍໄດ້ບວດສິກສາປະຕິບັດທັມຜ່ານມາເປັນເວລາຮວມທັງສອງສະໄຫມໄດ້ຕັ້ງ 25ປີ . ແມ່ນ້ຳມະຫານະທີ ສີທັນດອນຄອນພະເພັງ ຫລີ່ຜີ ບໍ່ອີ່ມດ້ວຍໂຄັນຂອນສັນໃດ ຈິດໃຈຂອງຍາພໍ່ເຖົ້າຈານຊາທອງດີ ສີວົງສາຊຸນຊະນະປັນຍາກໍບໍ່ອີ່ມດ້ວຍບຸນ ຄືການທຳຄວາມດີສັນນັ້ນ.

# ຄຳໄວ້ອາໄລເຖິງດວງວິນຍານຂອງປູ່ຈານທອງ

ຈາກຫລານ ພຣະຊາຍຄຳ ຈຳປາອຸທຸມ.

ໂດຍຄຸນລັກສະນະທົ່ວໄປ ຍາພໍ່ເຖົ້າ ຈານຊາທອງດີ ມີຈິດໃຈສຸຂຸມ ເຢືອກເຢັນ ແລະ ມີຈິດໃຈເຂັ້ມແຂງ, ຄວາມເຈັບໄຂ້ໄດ້ປ່ວຍ ຖືວ່າເປັນເລື່ອງທຳມະດາ ຂອງສັງຂານ ແລະ ຖືກຳລັງໃຈເປັນທີ່ຕັ້ງ.

ລູກຫລານທຸກໆຄົນ ໄດ້ເຝົ້າຮັກສາ ພະຍາບານ ບໍ່ເຫັນແກ່ຄວາມອິດເມື່ອຍ ຂໍແຕ່ໃຫ້ ຍາພໍ່ເຖົ້າຈານຊາທອງດີ ໄດ້ຫາຍຈາກການເຈັບປ່ວຍ ແຕ່ແລ້ວອາການປ່ວຍ ຂອງເພິ່ນ ບາງທີ ກໍໄຄແນ່ ບາງທີ ກໍຊຸດລົງຕາມລຳດັບ ແລະ ຕໍ່ມາອາການປ່ວຍກໍໄດ້ຫນັກລົງໄປ ວັນເວລາ ກໍໄດ້ມາເຖິງທີ່ສຸດ ຍາພໍ່ເຖົ້າຈານຊາທອງດີ ບິດາຜູ້ບັງເກີດເກົ້າ ຍາພໍ່ເຖົ້າຈານ ທີ່ເຄົາຣົບນັບຖືຮັກແພງຂອງລູກຫລານ ໄດ້ຈາກພວກເຮົາໄປດ້ວຍອາການອັນສະຫງົບ ໃນວັນທີ 3 ເດືອນພະຈິກ 1999 ກົງກັບວັນພຸດ ແຮມ 9 ຄ່ຳ ເດືອນ 11 ພ.ສ. 2542 ດ້ວຍໂຣກຊະຣາ ທີ່ບ້ານ ອຸທຸມໃຫມ່ ເມືອງ ສຸຂຸມາ ແຂວງຈຳປາສັກ.

ຍາພໍ່ເຖົ້າ ຈານຊາທອງດີ ໄດ້ຈາກລູກຫລານຍາດມິດໄປ ໂດຍບໍ່ມີວັນຫວນກັບມາ, ໄດ້ຖິ້ມຄວາມອາໄລ ອາວອນໂສກເສົ້າໄວ້ເບື້ອງຫລັງ.

ລູກຫລານຍາດມິດ ຂໍຕັ້ງຈິດອະທິຖານ ດ້ວຍອຳນາດແຫ່ງກຸສົນທັກສິນານຸປະທານນີ້ ຈົ່ງດົນບັນດານໃຫ້ດວງວິນຍານຂອງຍາພໍ່ເຖົ້າຈານຊາທອງດີ ຈົ່ງປະສົບແຕ່ສຸຂາລົມ ໃນສຳປາຍຍະພົບພູມເກີດ.

## ຍາພໍ່ເຖົ້າຈານຊາທອງດີ

ເປັນຜູ້ມີຈິດໃຈຫນັກແຫນ້ນ ຕັ້ງຫມັ້ນ ຢູ່ໃນຄຸນນະທັມການທີ່ຈະສ້າງຄວາມດີ ຈະຕ້ອງອົດທົນລະເວັ້ນ ການກະທຳໃນສິ່ງທີ່ບໍ່ຄວນ ແລະ ຕັ້ງຫນ້າກະທຳຕໍ່ສິ່ງທີ່ສົມຄວນ ບໍ່ເຄີຍມີຄວາມອິດສາ ບັງບຽດຜູ້ໃດ.

ຊີວິດໃດ ທີ່ຍາພໍ່ເຖົ້າຈານຊາທອງດີ ມີຄວາມຕັ້ງໃຈໄວ້ແລ້ວ ໄດ້ຜ່າຟັນ ບາກບັ່ນທຳຈົນສຳເລັດ ຈົນມີຜົນເຫັນທັນຕາ. ນັບວ່າເພິ່ນເປັນຜູ້ມີຄວາມອົດທົນຮັກໃນຄວາມຈິງ ປະພຶດຕາມຫລັກທັມ ໃນທາງພຣະພຸດທະສາສະຫນາ ໄດ້ຊື່ວ່າເປັນຄົນດີ ໃນຕອນຈົບຊີວິດ.

## ຍາພໍ່ເຖົ້າຈານຊາທອງດີ

ດ້ວຍເຫດທີ່ວ່າ ໄດ້ປາກົດມາແລ້ວ ມີແຕ່ສ້າງຄວາມດີ, ບໍ່ເຄີຍຂົ່ມເຫັງໃຫ້ທຸກແກ່ຜູ້ໃດ, ບໍ່ເຄີຍຕຳໜິ ຕິຕຽນ ມີແຕ່ເຄົາລົບຍົກຍ້ອງສັນລະເສີນ ຜົນບຸນຂອງຍາພໍ່ເຖົ້າຈານຊາທອງດີ ໄດ້ມີອິດທິພົນກະຈາຍຕົກໄປສູ່ລູກຫລານ ວົງສະກຸນ ວົງສາຄະນາຍາດ.

ຊີວະປະຫວັດຂອງຍາພໍ່ເຖົ້າຈານຊາທອງດີ ຈຶ່ງເປັນຊີວະປະຫວັດ ທີ່ເປັນຢ້ຽມຢ່າງອັນດີ ໃນວົງຍາດ ຂອງຕະກູນ ບ້ານເມືອງ ສົມກັບຊື່ສຽງວ່າ " **ທອງດີ** ".

## ຍາພໍ່ເຖົ້າຈານຊາທອງດີ

ເປັນຜູ້ມີຊີວິດທີ່ລ້ອມຮອບ ດ້ວຍຄວາມເຄົາລົບຮັກ ແລະ ນັບຖືອັນຈິງໃຈຕັ້ງແຕ່ຕົ້ນຈົນຈົບ ( ອາຍຸ 97 ປີ ) ບັ້ນປາຍຂອງຊີວິດ ກໍມີຍາດມິດ ລູກຫລານທົ່ວໄປ ຍົກຍ້ອງ ຫ່ວງໃຍ ອາໄລ ອາວອນເຝົ້າຄິດເຖິງຕະຫລອດຊາດ.

ຄົນເຮົາ ເກີດມາກໍຕ້ອງຕາຍ, ແຕ່ເລືອກຕາຍໃນຖານະ ທີ່ຄົນທັງຫລາຍບໍ່ໄດ້ສາບແສ່ງ, ບໍ່ໄດ້ເປັນມົນທິນ ຂອງຊີວິດ ມີຊີວິດທີ່ຂາວສະອາດ ປອດໃສ.

ຂໍໃຫ້ຍາດມິດຫລູກຫລານ, ເຫລັນ ແລະ ຫລ້ອນ ຈົ່ງຖືເອົາຊີວິດ ຄວາມດີ ຂອງຄົນດີ ທີ່ຊື່ວ່າ ຍາພໍ່ເຖົ້າຈານຊາທອງດີ ເປັນຕົວຢ່າງຊີວິດຂອງພໍ່ ແລະ ບັນພະບຸຣຸດ ທີ່ດີ ຂອງລູກ ໆຫລານ ໆ ຕາມພາລະ ແລະ ຖານະ ຂອງເຮົາ. ຍາພໍ່ເຖົ້າ ຈານຊາທອງດີ ມີຄວາມສຸກ ແລະ ສຶດຊື່ນ ບໍ່ເປັນຄົນທະເຍີ ທະຍານ ບໍ່ມັກໃຫຍ່ ໃຝ່ສູງ ເມື່ອຍັງມີຊີວິດຢູ່ ກໍບໍ່ກະວົນກະວາຍ ທຸລົນ ທຸລາຍ ໃນຍາມໃກ້ຈະຕາຍ ເພາະບໍ່ໄດ້ສ້າງກັມຊົ່ວເອົາໄວ້ ແລະ ກໍບໍ່ໄດ້ເປັນຫ່ວງຈົນເກີນໄປ.

ໃນທີ່ສຸດດ້ວຍອຳນາດ ຄຸນພຣະສີຣັດຕະນະໄຕຣ ລູກຫລານ ແລະ ຍາດມິດ ຈົ່ງໄດ້ຮັບ ຈະຕຸຣະພິພັດພອນໄຊ ຈາກສິ່ງສັກສິດໃນໂລກ ໃຫ້ຊີວິດຄວາມເປັນມາ ແລະ ຈາກໄປຈົ່ງຍາວນານຢູ່ກຸ່ມຊຸ່ມເຢັນ ຢ່າງຍາພໍ່ເຖົ້າຈານຊາທອງດີ. ຂໍໃຫ້ດວງວິນຍານ ຂອງ ຍາພໍ່ເຖົ້າຈານຊາທອງດີ ຈົ່ງເປັນສຸກນິຣັນດອນຢູ່ບົນສວງສວັນພຸ້ນເຖີດ.

ວຽງຈັນ, ວັນທີ 2 ທັນວາ 1999.

**ພຣະຊາຍຄຳ ຈຳປາອຸທຸມ.**

( ຖຸ້ມ )

# ★ ຄຳໄວ້ອາໄລເຖິງດວງວິນຍານຂອງປູ່ຈານທອງ

*********

ຈາກພວກລູກຫລານ. ພຣະສຸເມທາ( ຝາກ ) ພຣະສຸຣິຍາ ( ຈູດ ) ແລະ ສຳມະເນນຊາຍສະຫມຸດ ຈຳປາອຸທຸມ.

ປູ່ຈານທອງ ໄດ້ຈາກພວກລູກຫລານໄປ ໂດຍບໍ່ມີວັນຈະຫວນກັບມາ ຊີວິດຂອງປູ່ ເຕັມໄປດ້ວຍຄຸນຄວາມດີ ຄວາມເມດຕາປານີ ພົມວິຫານທັມ ປູ່ມີຊີວິດຍືນຍາວ ຫນຶ່ງສະຕະວັດ ນັບວ່າຫາບຸກຄົນໃດ ຈະເທົ່າປູ່ນັ້ນ ກໍຄົງຍາກ.

ຄວາມຕາຍ ຄືຫ້ວຍນ້ຳ ທີ່ໄດ້ໄຫລ ບໍ່ຂາດສິ້ນ ທຸກຄົນເກີດມາຕ້ອງທົນດື່ມ ກິນດ້ວຍຈຳໃຈ ບໍ່ວ່າໄພ່ ຫລື ຜູ້ດີບໍ່ເວັ້ນຄົນຮັ່ງມີ ຫລື ຍາກໄຮ້ ບໍ່ວ່າເຍົາໄວ ຫລື ຫນຸ່ມນ້ອຍ ຫລື ເຖົ້າແກ່ຊະລາ ບໍ່ວ່າຈອມຣາຊາ ຜູ້ຊົງອຳນາດ ແລະ ສາດສະດາຜູ້ຊົງສິນ ຫລື ບຸກຄົນຜູ້ທະມິນທັງມໂຫດ ຕ້ອງທົນດື່ມກິນດ້ວຍນ້ຳສາຍດຽວກັນ ເມື່ອໃດຫາກເຖິງວັນແຫ່ງທູດມໍລະນະຢຽມຢາມແລ້ວ ບຸກຄົນດັ່ງກ່າວນັ້ນ ກໍລ່ວງລັບດັບໄປເຫມືອນເຊັ່ນດຽວກັບປູ່ຈານທອງ.

ຂໍໃຫ້ດວງວິນຍານຂອງປູ່ຈົ່ງໄປສູ່ສຸຄະຕິພົບເຖີດ!

15. 12. 1999.

ນະຄອນຫລວງວຽງຈັນ.

# ແດ່ປູ
# ຄຳຈາລຶກຈາກຫລານ

**ອະໄພ ບົວຄຳ**

★ ປູ່ ເໝືອນດັ່ງຜູ້ເກີດເກົ້າ ປຸ້ມປຽບບິດາຂວັນ
ຮັກລື້ນຄຳລົ້ງຂຽນ ບໍ່ອາດພັນລະນາໄດ້
ຫ່ວງດັ່ງທິວໃຈຫ້ອຍ ສາຍໃຍ ຍາມທ່າງ
ເໝືອນທິວອິກ ຊິພຸ່ງມ້າງ ພໍຊາບວ່າປູ່ລາ

★ ປູ່ ປຽບດັ່ງທຽນແສງກ້າ ເຍືອງທາງໃຫ້ຫລານໄຕ່
ມອບດາບຄົມເຂັ້ມກ້າ ໃຫ້ຫລານສູ້ ສູ່ໄຊ
ປູ່ ປຽບດັ່ງໂພໄຮຕົ້ນ ບຸນຫນາຊິນ ໄດ້ເພິ່ງ
ໃຕ້ຮົ່ມສຸກຊື່ນຊ້ອຍ ສະບາຍບ້າງຊື່ນບານ

★ ເໝືອນດັ່ງມ່ວງໄຂ່ຕົ້ນ ໄດ້ເກີດຮ່ວມຮຽງຂວັນ ປູ່ນໍ
ເຂົາເຫລົ່າໄລຫນີ ປູ່ກໍລາຊາວບ້ານ
ປູ່ໄດ້ກອງກຸສົນສ້າງ ໃຫ້ໂລກາໄດ້ຈຳຈື່
ຊາດຫນ້າ ບຸນກຸສົນສິ່ງຍູ້ ຊູຊວ້ານ ປູ່ບໍ່ວາງ

★ບັດນີ້ ທຽນທີ່ເຄີຍສ່ອງແຈ້ງ ນານຊົ່ວສະຕະວັດ ມານັ້ນ
ລົມເຫຼົ່າໄຊຍຊົມພັດ ລັດສະໝີກໍເລີຍມົ້ວ
ແສງທີ່ເຄີຍໃສຈ້າ ກໍເລີຍແຮງອິດອ່ອນ ລົງແລ້ວ
ເຕືອນໃຫ້ຊາວພີ່ນ້ອງ ສັງຂານນັ້ນປຽນບໍ່ເຊົາ

★ອະນິດຈາ ວັດຕະສັງຂາລາ!
ທຸກສິ່ງພາຍແຜ່ນພື້ນ ໃນໂລກມວນມະນຸດ ເຮົານີ້
ບໍ່ທ່ອນມີ ຢູ່ຍືນຕະການໄດ້
ປຽບດັ່ງຕາເວັນຂຶ້ນ ພໍງາຍກໍເປັນບ່າຍ
ແລງລັບລົງລຸ່ມຟ້າ ລາແລ້ວລ່ວງໄປ

★ໂອ! ເວລາ ສັ້ນແທ້ໜາ ເມື່ອເປັນສຸກ
ໂອເວລາ! ນານແສນນານ ເມື່ອມີທຸກ
ສະຕະວັດໜຶ່ງ ມີທັງສຸກ ມີທັງທຸກ ເຫຼືອຄະນາ
ບັດນີ້ ເຖິງເວລາແລ້ວໜາ ແສງທຽນກ້າ ຖືກວາໂຍ
ຈະອຳລາ ຈາກໂລກາ ໄປສູ່ພົບແຫ່ງສັນຕິສຸກເອີຍ
ເວລາ! ຊ່າງສັ້ນເກີນໄປສຳລັບຄວາມຮັກ
ເຈົ້າຊ່າງນານເກີນໄປ ສຳລັບການຄອງຄອຍ
ຊີວິດ! ຍ່ອມມີສຸກ ແລະ ແສນທໍລະມານ

★ ຫລັບຕາເຖິດຫນາ ພາວະນາ ແລ້ວຫັນຫນ້າ ສູ່ສຸຂະຕິ

ປູ່ເອີຍ !

ໂລກາເຮົາ ມັນສັບສົນ ແສນວິກວົນ

ຄວາມດີ ທີ່ປູ່ທຳ ຈະນຳປູ່ ສູ່ສະຫວັນ

ຫລານຊິຈຳ ປູ່ຍັງຢູ່ ຄູ່ຂວັນຫລານ ນານຄູ່ຟ້າ

ແລະ ດິນເຖິດ !

ຂໍຈາລຶກບຸນຄຸນລົ້ນເກົ້າ ເຫນືອກະຫມ່ອມ.

ວຽງຈັນ, 01.01.2000.

# ແດ່ປູ່ທີ່ເຄົາຣົບ
# ຈາກຫລານຄຳໃບ ບົວຄຳ

ຂ້າພະເຈົ້າ ທ້າວຄຳໃບ ບົວຄຳ ພ້ອມດ້ວຍຄອບຄົວ ຂໍກ່າວຄວາມຮູ້ບຸນຄຸນ ຕໍ່ປູ່ ຜູ້ໃຫ້ກຳເນີດ ທັງແຫລ່ງສະຕິ, ປັນຍາ, ຊີວະພາບ ແກ່ລູກ, ແກ່ຫລານ ອັນມະຫາສານ. ຈົນມາຮອດປານນີ້ ຫລານເອງຈຶ່ງໄດ້ມີຄວາມຮູ້ ຄວາມສາມາດ ພ້ອມດ້ວຍໜ້າທີ່ວຽກງານອັນມີກຽດ ສົມເປັນຫລານຂອງປູ່ແທ້ໆ.

ຈຶ່ງຂໍສະແດງຄວາມຮູ້ບຸນຄຸນ ຄວາມກະຕັນຍູກະຕະເວທີອັນມາກລົ້ນ ແລະ ຂໍໃຫ້ດວງວິນຍານຂອງປູ່ ຈົ່ງໄປສູ່ສຸຄະຕິ, ໄປສູ່ແດນສະຫວັນ ແລະ ຂໍໃຫ້ຊື່ສຽງຂອງປູ່ ຈົ່ງດັ່ງກ້ອງກັງວານ ຢູ່ໃນຈິດໃຈ ຂອງລູກຫລານ ທຸກຮຸ່ນ ທຸກເຊັ່ນຄົນຕະຫລອດໄປ.

ປູ່ເອີຍ ! ຄຸນປູ່ມີ ມາກລົ້ນ ເອົາຫຍັງນໍຊີມາທຽບ
ໂລກາ ຍັງວ່ານ້ອຍ ແຜ່ນຟ້າຍັງວ່າແຄບ
ອັນໃດແທ້ ຊິດັ່ງປານ !

ວຽງຈັນ, 01 .01. 2000.

# ອາໄລ ອາວອນຫ່ວງຫາປູ່
# ຈາກຫລານສົມນຶກ ບົວຄຳ

ອັນວ່າໂລກາກວ້າງ ເຍີ້ນຍ່ານຍາວໄກ

ສຸດຊື່ວດິນແດນຂອງ ຂອບນະພາພາຍພື້ນ

ກໍຫາກພໍຄະນານັບ ຊັ່ງຊາໄກ ໃກ້

ແຕ່ວ່າບຸນຄຸນລົ້ນ ຂອງຄົນຜູ້ເປັນປູ່

ຈະຫາຫຍັງວັດແທກໄດ້ ທຽມເທົ້າທໍ່ຄຸນ ເພິ່ນເດ.

ປູ່ທີ່ແສນເຄົາລົບຮັກ ແລະ ນັບຖືຂອງລູກຫລານ ປູ່ໄດ້ຈາກລູກຫລານໄປບໍ່ມີວັນຈະຫວນກັບຕ່າວມາໃຫ້ລູກຫລານ ຍາດພີ່ນ້ອງໄດ້ເຫັນຫນ້າອີກ ເຫລືອໄວ້ແຕ່ຄຸນຄວາມດີ ແລະ ການອົບຮົມ ສັ່ງສອນຕັກເຕືອນ ກະຕຸກຊຸກຍູ້ ທຸກຖ້ອຍຄຳ ທຳນອງ ມັນຍັງດັງກ້ອງຢູ່ໃນສ່ວນເລິກ ຂອງຫົວໃຈ. ມັນເປັນແປວໄຟ, ມັນເປັນພະລັງອັນມະຫາສານ ທີ່ເຕືອນໃຈໃນຍາມຄິດເຖິງ ຫ່ວງຫາ.

ຫລານຄົນນີ້ ຂໍຈາລຶກບຸນຄຸນ ຂອງປູ່ໄວ້ເທົ່າກາລະນານ.

ຂໍໃຫ້ດວງວິນຍານ ຂອງປູ່ຈົ່ງໄປສູ່ສຸຄະຕິເຖີດ !

ວຽງຈັນ, ວັນທີ 04. 01. 2000.

# ຄະຕິພຸດທະທຳ ແລະ ຄຳໄວ້ອາໄລ
# ເຖິງ
# ດວງວິນຍານຂອງປູ່ຈານທອງ ສີວົງສາຊຸນຊະນະປັນຍາ
## ຈາກ
## ດຣ.ມະຫາທອງຄຳ ອ່ອນມະນີສອນ
**( ລູກບຸນທຳ )**

*******

- ດວງຕາເວັນລັບລາຂອບຟ້າໄປ ເຮັດໃຫ້ຕົ້ນໄມ້ໃບຫຍ້າ ດວງມາລາ ສາຍນ້ຳ ແລະ ແຜ່ນດິນຄອງຄອຍ ທີ່ຈະໄດ້ພົບແສງສະຫວ່າງວັນໃຫມ່ອີກ.
- ສາຍນ້ຳໄຫລລ່ອງລົງໄປ ໂດຍບໍ່ມີວັນຈະຫວນກັບ ຄົງປະໄວ້ແຕ່ຄວາມຄັ່ງຄ້ອຍນ້ອຍໃຈ ຮ່ຳໄຮຄະນຶງຫາ ຂອງຫມູ່ມັດສາປູປາ ເພາະຢ້ານຄວາມແຫ້ງແລ້ງຈະມາເຖິງ.
- ດອກໄມ້ໃບຂຽວແລ້ວກັບຕ່າວເຫລືອງ ຫ່ຽວແຫ້ງ ຮ່ວງໂຮຍຊຸຫລົ່ນ ເກື່ອນກອງ ຕາມທົ່ງຫຍ້າ ຫນ້າດິນ ຄື ຮູບພາບແຫ່ງຄວາມສະຫລົດໃຈ ໃນພາວະ ທີ່ບໍ່ຈີລັງ ຍັ້ງຍືນຂອງສັບພະສິ່ງທັງປວງ.

➩ ຄວາມເກີດ, ຄວາມເຖົ້າແກ່ຊະລາ, ຄວາມເຈັບເປັນປ່ວຍໄຂ້ ແລະ ຄວາມຕາຍເປັນສາຍໂສ້ເຫລັກກ້າ ຜູກມັດຊີວິດ ຂອງມວນມະນຸດ ແລະ ສັບພະສັດທັງຫລາຍ ດ້ວຍການໃສ່ກະແຈມໍລະນະ, ຫນີບແຫນ້ນຄາດຄ້ອງຈ່ອງຈຳ ນັບແຕ່ວັນເກີດ ຈົນເຖິງວັນຈາກໂລກໄປ.

ເຖິງແມ່ນມະນຸດຈະຮູ້ຄວາມຈິງ ຫລືບໍ່ຮູ້ ຍ້ອນອະວິຊາປົກຫຸ້ມ ຮຸມຫໍ່ ຄອບງຳຈິດໃຈກໍຕາມ ໃຜ ໆ ກໍມັກຈະໂອດໂອຍ ຮ້ອງຄາງ ອ້ອນວອນຕໍ່ສິ່ງສັກສິດ ຫລື ເທບພະເຈົ້າ ເຫລົ່າອິນພົມ ເພື່ອຂໍຄວາມຊ່ວຍເຫລືອ ໃຫ້ເພິ່ນພາຕົນພົ້ນຈາກໄພອັນຕະລາຍ, ຫວິດພົ້ນ ຈາກຄວາມເຖົ້າແກ່ຊະລາການ, ຂໍໃຫ້ມີຊີວິດ ຢູ່ຢ່າງສຸກສຳລານ ໂດຍປາສະຈາກພະຍາດໂລຄາ ແລະ ຂໍໃຫ້ມີອາຍຸ ວັນນະ ສຸຂະ ພະລະ ຕະຫລອດໄປ - ຢ່າໄດ້ປະສົບພົບພໍ້ ກັບກອງໄຟແຫ່ງມໍລະນະເລີຍ, ແຕ່ອັນນັ້ນ ມັນກໍເປັນພຽງຄຳອື່ນອ້ອຍອ້ອນວອນ ປະເລົ້າ ປະໂລມ ເພື່ອເປັນການໃຫ້ຂວັນກຳລັງໃຈ ແກ່ຕົນເອງເທົ່ານັ້ນ, ເພາະວ່າ ກົງກຳ ກົງກວຽນ ແຫ່ງຊີວິດຂອງມວນມະນຸດມັນຫມູນປິ່ນໄປສູ່ຈຸດສຸດສ້ຽງ ແຕກສະຫລາຍຕາມກົດເກນວັດຕະສິງສານ ຫລື ວັດຕະວົນ ເຊິ່ງເປັນວັງເວີນ ອັນເວີ້ງວ້າງ ວ່າງເປົ່າ ຂອງສັດຈະທຳນິລັນດອນຄື : ອະນິດຈັງ ທຸກຂັງ ແລະ ອະ

ນັດຕາ. ພະພຸດທະສາສະໜາ ຢັ້ງຢືນວ່າ :

➪ **<u>ອະນິດຈັງ</u>** : ຄືຄວາມຜັນແປ ປ່ຽນແປງ, ຄວາມບໍ່ຈີລັງຍັ້ງຍືນ, ຄວາມບໍ່ທ່ຽງແທ້ແນ່ນອນ, ຄວາມເກີດເປັນຊີວິດຂຶ້ນໃນເບື້ອງຕົ້ນ, ເຕີບໂຕ ໃຫຍ່ຂຶ້ນ ໃນໄລຍະຕໍ່ມາ ແລ້ວກໍແຕກທະລາຍດັບສູນໄປໃນທີ່ສຸດ ພະພຸດທະອົງຕັດໄວ້ວ່າ :

"ຮູບນີ້ ( ຮ່າງກາຍນີ້ ) ເກົ່າໂຊະໂຊມແລ້ວ ເປັນຮັງຂອງໂລກພະຍາດ ເປັນຂອງເປື່ອຍເພ ເປັນກາຍເນົ່າຈະແຕກທະລາຍຍ້ອນວ່າຊີວິດມີຄວາມຕາຍເປັນຂັ້ນສຸດທ້າຍ ".

➪ **<u>ທຸກຂັງ</u>** : ສັງຂານນີ້ເປັນທຸກ ທຸກຍ້ອນທົນທານຢູ່ໃນສະພາບເດີມບໍ່ໄດ້ ສືບຢູ່ໃນສະພາບໜຸ່ມແໜ້ນບໍ່ໄດ້, ທົນຢູ່ຕະຫລອດໄປບໍ່ໄດ້.

ສັງຂານນີ້ ເປັນທຸກຍ້ອນຕັນຫາ 3 ປະການ ທີ່ຈົມເລິກ ຝັງຮາກຢູ່ໃນດວງໃຈຂອງທຸກຄົນ ອັນໄດ້ແກ່ **<u>ກາມມະຕັນຫາ</u>** ຄວາມດີ້ນຮົນປວດກະສັນຢາກ ໃນເລື່ອງກາມາລົມ ຊົມຕັນຫາ, ຊົມແລ້ວຢາກຊົມອີກ, ເສບແລ້ວ ຢາກເສບອີກ ບໍ່ຮູ້ອີ່ມ ບໍ່ຮູ້ເມືອງພໍຈັກເທື່ອເບື່ອບໍ່ເປັນ ເໝືອນທະເລບໍ່ຮູ້ເບື່ອນໍ້າ. **<u>ພະວະຕັນຫາ</u>** ມີຄວາມກັງວົນ ວຸ່ນວາຍກະຫາຍຢາກ ຄື ຢາກເປັນນັ້ນ ຢາກເປັນນີ້ ຢາກເປັນເສດຖີ ຢາກເປັນຜູ້ມີຍົດຖາບັນດາສັກດ້ວຍຄວາມທະເຍີທະ

ຍານ ຢ່າງບໍ່ມີຂອບເຂດ. **ວິພະວະຕັນຫາ** ບໍ່ຢາກເປັນອັນນັ້ນ ບໍ່ຢາກເປັນອັນນີ້ ຄື ເປັນທຸກຍ້ອນບໍ່ຢາກໃຫ້ຮູບຮ່າງ ເນື້ອຄີງນີ້ປ່ຽນແປງ ບໍ່ຢາກເຖົ້າ ບໍ່ຢາກແກ່ ແລະ ບໍ່ຢາກຕາຍ, ທັງໆ ທີ່ຄວາມຕາຍ ເປັນຂອງຈິງ ຂອງແທ້ ບໍ່ເຄີຍພິກຜັນປ່ຽນແປງ. ນອກນີ້ກໍມີຄວາມທຸກປະຈໍາຊີວິດ ທີ່ເກີດຂຶ້ນ ໃຫ້ຄົນແບກຫາບ ແກ່ດຶງ ຢ່າງບໍ່ມີວັນຢຸດ ເຊັ່ນ ເປັນທຸກຍ້ອນຢາກໄດ້ເງິນຄໍາ ວັດຖຸສົມບັດ ສິ່ງຂອງເຮືອນຊານ ຍານພາຫະນະ. ທຸກຍ້ອນພາດພັ້ງຜິດຫວັງ ຫລົ້ມຈົມ ໃນຊີວິດ ແລະ ການງານ ເຊັ່ນເຄີຍມີເງິນຄໍາ ກໍກັບກາຍມາເປັນຄົນຕົກທຸກ ໄດ້ຍາກ, ເຄີຍເປັນຜູ້ມີຍົດສັກ ກໍຕົກເສຍຈາກຕໍາແຫນ່ງ, ຫນ້າທີ່, ເຄີຍມີຄວາມສຸກສໍາລານ ສະຫນຸກໃຊ້ ສະຫນຸກຈ່າຍຢ່າງຟຸມເຟືອຍ ກໍຕົກເປັນຄົນຂາດເຂີນ ຫມົດຊັບສົມບັດ ມີອັນໃດກໍຊື້ຈ່າຍ ຂາຍກິນຈົນກ້ຽງ ຫາລ້ຽງຕົນເອງແລະ ຄອບຄົວ ກໍບໍ່ກຸ້ມ, ເຄີຍເປັນຄົນທີ່ປະຊາຊົນ ສັງຄົມທົ່ວໄປຍ້ອງຍໍສັນລະເສີນມີຫນ້າມີຕາໂດດເດັ່ນ ເປັນຄົນດັງ ແລ້ວກໍຕົກອັບ ຕໍ່າຕ້ອຍ ຖືກເຂົາກ່າວປະນາມຕິສິນນິນທາວ່າຮ້າຍ ເຊິ່ງທັງຫມົດນີ້ຄື : ກອງທຸກປຽບດັ່ງກອງໄຟສຸມໄຫມ້ຫມາກຫົວໃຈ ຄືດັ່ງຫອກສາມງ່າມອັນຄົມແຫລມ ປັກສຽບໃສ່ກາງຫລັງຄໍ້າທັ່ງ ຍູ້ຍັນໃຫ້ຄົນຜູ້ມີທຸກ ຍິ່ງທະວີຄວາມທຸກຮ້ອນ, ເຈັບແສບຕື່ມຂຶ້ນນັບມື້. ອີກອັນຫນຶ່ງຄົນ

ມີຄວາມທຸກ ຍ້ອນວ່າລູກຕາຍເສຍ ເມຍຕາຍຈາກ ພີ່ນ້ອງລູກເຕົ້າ ເຫລົ່າຫລານພັດພາກ ແຕກຊະກັນໄປຢູ່ຄົນລະທິບລະແດນ. ທຸກຍ້ອນຄວາມເຈັບໄຂ້ໄດ້ພະຍາດ, ທຸກຍ້ອນຄວາມອາຄາດ ຄຽດແຄ້ນພະຍາບາດຈ່ອງກຳທຳເວນເຊິ່ງກັນ ແລະ ກັນ, ທຸກຍ້ອນຄວາມໂລບມາກ ໂລພາ ມາຫຸ້ມຫໍ່ຈິດໃຈ, ທຸກຍ້ອນໄຟໂທສະຄວາມຮ້າຍຂາດມາເຜົາໄຫມ້ຈິດວິນຍານ, ທຸກຍ້ອນຕົວໂມຫະຄວາມໂງ່ ຄວາມບໍ່ຮູ້ ຄວາມຫລົງໄຫລມືດບອດຢູ່ໃນອະວິຊາ ມາບົດບັງສະຕິປັນຍາ ໃຫ້ເຫັນຜິດເປັນຖືກ ເຫັນກົງຈັກ ເປັນດອກບົວເຊິ່ງຊຸກດັນຍູ້ຍັນໃຫ້ສ້າງຄວາມຊົ່ວ ກຳຊົ່ວ ຢ່າງບໍ່ມີວັນສິ້ນສຸດ ແລະ ຍັງມີກອງທຸກອີກ ຮ້ອຍແປດພັນປະການ ເປັນຂວາກໜາມສຽບແທງ ຊີວິດມະນຸດຢູ່ທຸກວັນເວລາ ຢ່າງບໍ່ຢຸດເຊົາ.

➪ **<u>ອະນັດຕາ</u>** : ຄວາມບໍ່ແມ່ນຕົວຂອງເຮົາ, ບໍ່ແມ່ນຕົວຂອງເຈົ້າ ບໍ່ແມ່ນຕົວຂອງຂ້ອຍ ແລະ ບໍ່ແມ່ນຂອງໃຜ ເພາະຊີວິດຮູບນາມ ຂອງແຕ່ລະຄົນ ເປັນພຽງສົມມຸດກັນຂຶ້ນ ວ່າເປັນຜູ້ນັ້ນ ຜູ້ນີ້ຊື່ໆ ( ມີບາງຄົນອາດຕັ້ງບັນຫາຂຶ້ນວ່າຄັນບໍ່ແມ່ນຕົວຂອງຕົນແລ້ວໃຫ້ເຂົາເອົາມີດປາດ ພ້າຟັນລອງເບິ່ງ ຄັນບໍ່ຮ້ອງຕາຍກາກ ໆ - ອັນນີ້ແມ່ນຄຳຖາມ ຫລື ບັນຫາຊາວບ້ານທຳມະດາເວົ້າກັນ, ແຕ່ອະນັດຕານັ້ນເພິ່ນມີຄວາມຫມາຍທາງປັດຊະຍາລະດັບສູງ, ຖ້າ

ບໍ່ໃຊ້ປັນຍາສຶກສາພິຈາລະນາ ຢ່າງເລິກເຊິ່ງ ເຖິງຖອງແລ້ວ ກໍຈະບໍ່ເຂົ້າໃຈໄດ້ ). **<u>ອະນັດຕາ</u>** ຄວາມບໍ່ແມ່ນຕົວຂອງເຮົາ ບໍ່ແມ່ນສົມບັດຂອງເຮົານັ້ນ ຍ້ອນເຮົາບອກບໍ່ໄດ້ ໃຊ້ບໍ່ຟັງ ຄື : ບອກວ່າບໍ່ໃຫ້ຜົມຫງອກ ມັນກໍຫງອກ, ບໍ່ໃຫ້ແຂ້ວຫລ່ອນມັນກໍຫລ່ອນ, ບໍ່ໃຫ້ຫນັງຍານເຖົ້າແກ່ ມັນກໍຊຳພັດເຖົ້າຊະລາໄປ, ບາດມັນເຈັບ ແລະ ມັນຊິຕາຍ ເຮົາບອກໄວ້ວ່າ ຢ່າເຈັບ ແລະ ຢ່າຕາຍ ພະຍາມັດຈຸລາດ ກໍບໍ່ຟັງຄວາມເຮົາ ແລ້ວກໍເອົາຊີວິດ ທີ່ເປັນອະນັດຕານີ້ໄປ ຢ່າງບັງອາດ ທ້າທາຍ ໂດຍບໍ່ມີພະລັງອຳນາດໃດ ໆ ຈະມາຂັດຂວາງກັ້ນກາງໄວ້ໄດ້.

ເມື່ອສິ້ນລົມຫາຍໃຈຕົວຄົນ ຫລື ຕົວເຂົາ ຕົວເຮົາເຈົ້າຂ້ອຍກໍປ່ຽນແປງໄປເປັນຊາກສົບເນົ່າເປື່ອຍເປັນທຳມະດາ ບໍ່ສາມາດເອີ່ຍອ້າງຮຽກຮ້ອງເອົາຊັບສົມບັດເງິນຄຳສິ່ງຂອງ ໄດ້ແມ່ນແຕ່ຫນ້ອຍດຽວ. ມໍລະດົກທັງຫມົດທີ່ຜູ້ຕາຍ ປະໄວ້ ກໍເຫລືອເປັນສາຍໂສ້ສຸບຂາ ຮັດແຂນຕີນມື ຂອງລູກຫລານຜູ້ເປັນທາຍາດ ສືບທອດຕໍ່ໄປເລື້ອຍໆ ຈົນກວ່າສິ່ງເຫລົ່ານັ້ນ ຈະສູ້ງສະຫລາຍຫມົດສິ້ນໄປຕາມກົດເກນອະນິດຈັງ. ພະພຸດທະອົງ ໄດ້ຊົງຕັດ ຕັກເຕືອນໄວ້ວ່າ :

➪ ທ່ານທັງຫລາຍຈົ່ງຈະເລີນມະລະນັດສະຕິ ຈົ່ງກຳນົດລະ

ນຶກເຖິງຄວາມຕາຍຂອງທ່ານທັງຫລາຍເທີ້ນ. ຄວາມຕາຍຂອງສັບພະສັດທັງຫລາຍນີ້ແນ່ນອນແທ້ໆ ຊີວິດບໍ່ແນ່ນອນ ສັງຂານທັງຫລາຍທັງປວງບໍ່ທ່ຽງ ມີຄວາມສິ້ນສະຫລາຍ ແລະ ຄວາມເສື່ອມໄປເປັນທຳມະດາທ່ານທັງຫລາຍ ຈົ່ງເປັນຜູ້ບໍ່ປະຫມາດ ທັງກາງເວັນ ແລະ ກາງຄືນເທີ້ນ !

➪ ຂັນ 5 (ຮູບ, ເວທະນາ,ສັນຍາ,ສັງຂານ ແລະ ວິນຍານ) ທີ່ມີຄວາມແຕກທະລາຍເປັນທຳມະດາ ກໍແຕກທະລາຍໄປແລ້ວ, ສັງຂານທັງປວງບໍ່ທ່ຽງ ກໍຈົບລົງດ້ວຍຄວາມຕາຍແລ້ວ, ທ່ານຜູ້ຮູ້ຈົ່ງສຳນຶກເຖິງຄວາມຈິງ ແລະ ສັດຈະທຳດັ່ງກ່າວນີ້ໄວ້ທຸກເວລານາທີເທີ້ນ !

ການກ່າວສະເຫນີຫລັກພະພຸດທະສາສະຫນາ - ກົດໄຕລັກທັງ 3 ປະການ ອັນເປັນທຳມະລະດັບປະລະມັດ ຄື : ທຳມະອັນເປັນ ຫລັກປັດຊະຍາຊີວິດລະດັບສູງ ມາໃຫ້ຜູ້ອ່ານໄດ້ພິຈາລະນານຳກັນນີ້ ບໍ່ໄດ້ຫມາຍຄວາມວ່າ ຈະໃຫ້ທຸກຄົນເຫັນແຈ້ງຢ່າງເລິກເຊິ່ງ ແລ້ວປ່ອຍປະລະວາງເສຍເຊິ່ງກິເລດຕັນຫາ ຕັດພັນທະແຫ່ງໂລກນີ້ໄດ້ໂລດດອກ.ຜູ້ຂຽນເປັນພຽງນຳເອົາຄວາມຈິງສັດຈະທຳ ໃນພະພຸດທະສາສະຫນາມາເວົ້າສູ່ກັນຟັງຕື່ມອີກທໍ່ນັ້ນ. ຫາກວ່າຜູ້ໃດມີອາສະຫນາປາລະມີ ແລະ ມີອິນຊີແກ່ກ້າ ສາມາດ

ເຂົ້າໃຈຄວາມຈິງ ແລະ ນຳໄປປະຕິບັດຕາມພຸດທະທຳແລ້ວ - ເຖິງແມ່ນບໍ່ໄດ້ຫລາຍ ກໍພຽງແຕ່ຮູ້ຈັກກຳນົດຈິດຈຳ ແລະ ປ່ອຍປະລະວາງກິເລດຕັນຫາອອກຈາກໃຈ ປ່ອຍປະລະວາງກອງທຸກອອກຈາກໃຈໄດ້ສ່ວນໃດສ່ວນຫນຶ່ງ ກໍນັບວ່າເປັນບຸນເປັນກຸສົນມະຫາສານແລ້ວ ຍິ່ງປະຕິບັດໄດ້ສູງຂຶ້ນເລິກເຊິ່ງຂຶ້ນເທົ່າໃດ ກໍຍິ່ງດີຂຶ້ນເທົ່ານັ້ນ. ພະພຸດທະອົງ ເພິ່ນບໍ່ໄດ້ບັງຄັບ - ບໍ່ໄດ້ບັນຊາໃຫ້ເຊື່ອຫລືບໍ່ເຊື່ອເພິ່ນໃຫ້ໃຊ້ສະຫມອງປັນຍາຄິດພິຈາລະນາເບິ່ງຄັກໆ ຄັນແມ່ນເຫັນວ່າດີ ແລະ ຖືກຕ້ອງສົມເຫດສົມຜົນແລ້ວ ກໍຈົ່ງລົງມືປະຕິບັດເອົາເອງ ແລ້ວຈະຮູ້ແຈ້ງເຫັນຄວາມຈິງດ້ວຍຈິດໃຈຂອງຕົນເອງຢ່າງຫລີກລຽງບໍ່ໄດ້ແນ່ແທ້. ພະທຳຂອງພະພຸດທະເຈົ້າ ຄືດັ່ງເສັ້ນທາງອັນສະຫວ່າງສະໄຫວ ສະອາດບໍລິສຸດ ຈົບງາມປອດໄພ ແລະ ສະຫງົບສະຫວ່າງ ສ່ວນຜູ້ທີ່ຈະເລືອກຍ່າງເດີນໄຕ່ຕາມນັ້ນ ແມ່ນຕົວຂອງແຕ່ລະບຸກຄົນເປັນຜູ້ເລືອກເອົາເອງ. ເພາະວ່າ ສັດຈະທຳ, ການຮູ້ແຈ້ງເຫັນຈິງ ຫລືການທີ່ຈະບັນລຸທຳຂັ້ນສູງຂຶ້ນໄປນັ້ນ ບໍ່ແມ່ນຢູ່ບ່ອນອື່ນ ແມ່ນຊອກເຫັນໄດ້ຢູ່ໃນຕົວຄົນເຮົານີ້ເອງ ຊອກເຫັນໄດ້ໃນຮ່າງກາຍຍາວວາຫນາຄືບ ແລະ ໃນຫົວໃຈ ສະຕິປັນຍາຂອງຄົນນີ້ຫັ້ນນັ້ນ ບໍ່ຄວນໄປຊອກຫາທີ່ເພິ່ງອັນອື່ນທີ່ບໍ່ຫມັ້ນຄົງ ຕົນທໍ່ນີ້ແລ ເປັນທີ່ເພິ່ງຂອງຕົນ ມີແຕ່ໃຫ້ຍຶດຫມັ້ນ

ເອົາພະພຸດ ພະທຳ ພະສົງເປັນສະລະນະທີ່ເພິ່ງ ເພາະເຮົາເອົາທຳມະຄຳສັ່ງສອນຂອງພະພຸດທະອົງມາປະຕິບັດ ພະພຸດທະອົງເປັນຜູ້ຕັດສະຣູ້ສັດຈະທຳ ຊາວພຸດມີໜ້າທີ່ຮຽນຮູ້ ແລະ ປະຕິບັດຕາມຮອຍຂອງພະພຸດທະອົງຜົນອອກມາກໍຄືຈະໄດ້ພົ້ນຈາກທຸກດັ່ງກ່າວມາແລ້ວເປັນແນ່ແທ້. ໂປດພິຈາລະນາ ແລະເຂົ້າໃຈນຳກັນວ່າ ການປົງຫາບເຂົ້າ ຫາບຂອງໜັກລົງຈາກບ່າ ເຮົາຮູ້ສຶກສະບາຍເບົາເນື້ອເບົາຄີງ - ການທີ່ເຮົາປົງກອງທຸກຄວາມທຸກ ຄວາມມືດໄຫມັ້ນວົວຫມອງ ອອກຈາກດວງໃຈ ເຮົາກໍຮູ້ສຶກເບົາສະບາຍຍິ່ງກວ່າປົງຫາບໜັກໆເສຍອີກ. ເພິ່ນກ່າວວ່າກິເລດຕັນຫາໂລພະ ໂທສະ ໂມຫະ ມານະທິດຖິ ເປັນຂອງໜັກ ໜັກຢູ່ໃນຫົວໃຈໄຫມ້ຫມົກຢູ່ໃນສະໝອງ ດັ່ງນັ້ນ ການທີ່ຄົນເຮົາມີສະຕິຮູ້ທັນເລ່ກົນຂອງມັນແລ້ວ ປ່ອຍປະປົງວາງ ຫລື ມ້ວນມັດປັດຖິ້ມອອກຈາກໃຈໄປເທື່ອລະເລັກລະນ້ອຍ ກໍຈະຄ່ອຍໆມີຄວາມສຸກຂຶ້ນເລື້ອຍໆ.

ຂໍ້ສຳຄັນທີ່ຢາກຈະເນັ້ນໜັກໃນທີ່ນີ້ຄື : ພວກເຮົາລ້ວນແລ້ວແຕ່ແມ່ນປຸຖຸຊົນຄົນທຳມະດາຍັງບໍ່ທັນແມ່ນພະອະລິຍະເຈົ້າທີ່ໄດ້ບັນລຸມັກຜົນນິບພານ ການທີ່ຍຶກຫລັກ ອະນິດຈັງຄວາມບໍ່ທ່ຽງ, ທຸກຂັງຄວາມເປັນທຸກ ແລະ ອະນັດຕາ ຄວາມບໍ່ແມ່ນຕົວຕົນຂອງເຈົ້າ

ຂອງຂ້ອຍຂຶ້ນມາສະເຫນີນີ້ ແມ່ນເພື່ອເຕືອນສະຕິເຊິ່ງກັນ ແລະ ກັນບໍ່ໃຫ້ປະຫມາດທັງກາງເວັນ ແລະ ກາງຄືນ, ບໍ່ປະຫມາດວ່າຍັງຫນຸ່ມຢູ່ບໍ່ຟ້າວສ້າງສາພັດທະນາດອກ, ຍັງບໍ່ທັນເຖົ້າຍັງບໍ່ທັນປ່ວຍໄຂ້ບໍ່ຕາຍງ່າຍດອກ, ບາດເຖົ້າບາດແກ່ຈິ່ງຄ່ອຍສ້າງຄວາມດີຈິ່ງຄ່ອຍຖືສິນຖືທຳ ອັນນີ້ເພິ່ນເອີ້ນວ່າປະຫມາດຊີວິດ ຜົນສຸດທ້າຍ ກໍຈະເສຍດາຍເວລາ ແລະ ກິນແຫນງຕາມພາຍຫລັງແລ້ວກໍຫລັ່ງນ້ຳຕາຮ້ອງໄຫ້ເສຍລ້າໆ.

- ຊີວິດຄົນນີ້ສັ້ນ ວັນເວລາຫັນປິ່ນໄປຢ່າງໄວວາ ຄືດັ່ງສາຍນ້ຳແມ່ນະທີໄຫລລົງທີ່ຕ່ຳບໍ່ຖ້າໃຜ, ຜູ້ໃດບໍ່ປະຫມາດ ຮູ້ຈັກຍາດວັນຍາດເວລາສ້າງຄວາມດີ ສ້າງຜົນງານແຂ່ງຂັນກັບ ກົງລໍ້ຫມູນວຽນຂອງກາລະເວລາຜູ້ນັ້ນກໍຈະມີໄຊຊະນະໃນຊີວິດ ມີຜົນງານອັນຈົບງາມປະດັບຕົນເອງ ແລະປະດັບແຜ່ນດິນ ເຊິ່ງສົມຄວນທີ່ຈະໄດ້ ຮັບການຍ້ອງຍໍ ສັນລະເສີນເປັນຢ່າງຍິ່ງ.

- ຊີວິດຄົນສຸດແສນແລບບາງກວ່າເສັ້ນໄຫມໃຍແມງມູມພໍແຕ່ຖືກສິ່ງໃດສິ່ງຫນຶ່ງມາແຕະຕ້ອງກໍຂາດສະບັ້ນໄປ ດັ່ງນັ້ນ ຄວນຮັກຫວງແຫນ ແລະ ຖະຫນອມຊີວິດ

ດ້ວຍການຮີບຟ້າວຕື່ນຂຶ້ນຈາກຄວາມມືດມົນຫລົງໄຫລ ຕື່ນຂຶ້ນຈາກການຫລັບນອນແບບບໍ່ຮູ້ເມື່ອຄືງແລ້ວຕັ້ງໜ້າ ສ້າງຢູ່ທຳກິນ ພັດທະນາຊີວິດໃຫ້ຢູ່ດີກິນດີ, ມີສິນທຳປະຈຳ ໃຈ, ໃຫ້ຄວາມຮັກຄວາມເມດຕາ ແກ່ລູກເຕົ້າຄອບຄົວ ແລະ ແກ່ທຸກຄົນ

- ຊີວິດທີ່ເຕັມໄປດ້ວຍກອງທຸກ ຍິ່ງຈະທຸກຂະເວດທະນາໂສກ ເສົ້າຂຶ້ນນັບມື້ ຖ້າຫາກເຈົ້າຂອງຊີວິດ ບໍ່ຄ່ອຍໆພິຈາລະນາ ປ່ອຍປະລະວາງຄວາມໂລບມາກໂລພາ, ບໍ່ປະປົງຄວາມ ໂລບມາກໃນຕັນຫາຕາບອດ, ບໍ່ປົດຫາບປົງໂງ່ນຫີນແຫ່ງ ຄວາມເປັນຄົນໃຈໂຫດໃຈຮ້າຍ(ໂທສະ), ບໍ່ປົດປ່ອຍປະຖິ້ມ ເຊື້ອຄວາມເຫັນຜິດຄວາມໂງ່ໂມຫະ, ບໍ່ກຳຈັດຕັດຖິ້ມຄວາມ ຜີງູເອົາແຕ່ຮູໂຕ,ບໍ່ມອດໄຟແຫ່ງຄວາມເຫັນແກ່ຕົວ ເພື່ອໃຫ້ ເກີດຄວາມເບົາສະບາຍ ໃນທາດໃນທອງ ແລະ ດວງໃຈໄປ ເທື່ອກ້າວ.
- ຊີວິດຈະບໍ່ມີຄ່າ, ຊີວິດຈະແກ່ເຖົ້າຊະລາໄປລ້າໆ ຖ້າຫາກເຈົ້າຂອງຊີວິດ ນັ່ງງໍມື້ງຕີນ ຄອງຄອຍໂອກາດ ວາດສະໜາ ຄອຍບຸນມາຜະຫລະສິ່ງ ແຕ່ບໍ່ລົງມືເຮັດຫຍັງ

ເລີຍ ຍ້ອນວ່າຄາຄວາມຂີ້ຄ້ານມັກງ່າຍຍ້ອນກິນແລ້ວ ກໍ່ນອນ ອອນຊອນນຳແຕ່ຄວາມສຸກທີ່ຜູ້ອື່ນຈະມາຍໍຍື່ນປ້ອນໃຫ້. ເພິ່ນກ່າວວ່າຄົນປະເພດນີ້ ບໍ່ຕ່າງຫຍັງກັບຕົ້ນໄມ້ຕາຍຢືນ ເຊິ່ງບໍ່ມີວັນທີ່ຈະໃຫ້ດອກອອກໃບໄດ້ເລີຍ !

➩ ຊີວິດຄືດັ່ງ ຄົນພາຍເຮືອຂຶ້ນນ້ຳໄຫລ, ຄວາມທຸກ ແລະ ອຸປະສັກຄື ກະແສສາຍນ້ຳ ທີ່ໄຫລທັ່ງລົງຢ່າງຮຸນແຮງ ຖ້າວ່າຄົນພາຍເຮືອ ບໍ່ອອກແຮງສູ້ຊົນທົນທານ ຢ່າງເອົາການເອົາງານແລ້ວ ຫົວເຮືອກໍຈະຕ່າວລົງງຕາມແຮງນ້ຳໄຫລ. ທ້າຍສຸດກໍຈະຂຶ້ນບໍ່ເຖິງໄປບໍ່ຮອດຈຸດໝາຍປາຍທາງ.ຜູ້ກ່ຽວກໍຈະພົບແຕ່ຄວາມປະລາໄຊຜິດຫວັງໃນຊີວິດຕະຫລອດໄປ.

➩ ຊີວິດຄົນບໍ່ມີຫຍັງແຕກຕ່າງກັນ ໃນບັ້ນຕາຍແມ່ນແຕ່ໜ້ອຍດຽວ. ເມື່ອສິ້ນລົມຫັນໃຈ ຊີວິດກໍດັບຈິດກໍມອດ, ສ່ວນວ່າຄວາມແຕກຕ່າງກັນນັ້ນແມ່ນຢູ່ທີ່ຍາມຍັງມີຊີວິດຢູ່ດັ່ງນັ້ນ ຄົນທີ່ມີຄວາມດຸໝັ່ນຂະຫຍັນພຽນ, ອົດທົນ ອອກແຮງເຮັດວຽກສ້າງກຳດີ ຄວາມດີຢ່າງບໍ່ປະໝາດ ບໍ່ປ່ອຍປະວັນເວລາໃຫ້ຜ່ານໄປລ້າໆ ເຂົາຜູ້ນັ້ນຄືຜູ້ມີໄຊຊະນະຕ່າງຈາກຜູ້ອື່ນ.

➪ ຊີວິດທຸກຊີວິດຕົກຢູ່ໃນອຳນາດຂອງຄວາມເກີດແກ່ເຈັບ ແລະ ຕາຍຊີວິດໝູນຕົວໄປສູ່ຈຸດດັບ ສະຫລາຍຢ່າງໄວວາ ຍ້ອນເຫດນັ້ນເຮົາຈະນິ້ງນອນໃຈເຮັດເສີຍເມີຍຢູ່ໄດ້ຈັ່ງໃດ ຈົ່ງຮີບຟ້າວເຮັດ ຮີບຟ້າວສ້າງຜົນງານ ຮີບຟ້າວກຳຈັດບາບກຳ ແລະ ຄວາມບໍ່ດີທັງຫລາຍອອກຈາກຈິດໃຈ ແລະ ຊີວິດ ແລະ ໃຫ້ຮີບຮ້ອນສ້າງຄຸນງາມຄວາມດີ ສ້າງບຸນ ເພື່ອເຮັດໃຫ້ຈິດໃຈບໍລິສຸດສະຫງົບສະຫວ່າງ ມ່ວນຊື່ນ ເບີກບານຕະຫລອດໄປ!

➪ ຄົນດີທີ່ມີສັກສີເປັນມະນຸດ ຍ່ອມບໍ່ນິ້ງນອນລໍຖ້າວັນມໍລະນະ ບໍ່ຢ້ານກົວຕໍ່ຄວາມຕາຍ, ບໍ່ລໍຖ້າແຕ່ກິນເພື່ອມີຊີວິດຢູ່ແຕ່ລະມື້ບໍ່ຂີ້ຄ້ານອອກແຮງງານ, ບໍ່ເປັນຄົນຮົກໂລກ ບໍ່ເປັນມານສັງຄົມ ແຕ່ຕ້ອງເປັນມະນຸດແທ້ ມະນຸດຜູ້ໃຊ້ເຫື່ອແຮງ ສະຕິປັນຍາຄວາມຮູ້ຄວາມສາມາດ ແລະ ສອງຝາມືອອກແຮງງານ ຫາລ້ຽງຊີບເພື່ອຕົນເອງຄອບຄົວ ແລະ ສັງຄົມ ໃຫ້ມີຄວາມສຸກ ມີຄວາມສີວິໄລດ້ວຍຈິດໃຈຂອງຄົນຜູ້ສ້າງໂລກ ບໍ່ແມ່ນຜູ້ທຳລາຍໂລກ.

ທ່ານຜູ້ອ່ານທີ່ເປັນເພື່ອນຮ່ວມເກີດແກ່ເຈັບຕາຍທັງຫລາຍ!

ມະນຸດທຸກຄົນຕະຫລອດຮອດສັບພະສັດທັງຫລາຍ ກໍລ້ວນແຕ່ຕົກຢູ່ໃນກົດເກນແຫ່ງວັດຕະສົງສານ ຫລື ເອີ້ນວ່າ ກົດແຫ່ງໄຕລັກ ຄື ລັກສະນະປະຈຳຂອງສັງຂານ 3ປະການ ດັ່ງກ່າວມາແລ້ວດ້ວຍກັນທັງນັ້ນ. ປູ່ຈານທອງ ຜູ້ເປັນທີ່ເຄົາລົບຮັກ ນັບຖື ແລະ ຮັກແພງຂອງລູກຫລານ ຍາດຕິພີ່ນ້ອງຊາວບ້ານອຸທຸມໃຫມ່ ແລະ ເພື່ອນມິດທັງຢູ່ໃກ້ແລະຢູ່ໄກ ກໍໄດ້ນຳເອົາຊີວິດສັງຂານ ອັນບໍ່ທ່ຽງແທ້ແນ່ນອນຂອງເພິ່ນ ລ່ອງລອຍວິນຍານໄປຕາມເສັ້ນທາງ ຫລື ກະແສວັດຕະວົນແຫ່ງ ອະນິດຈັງ, ທຸກຂັງ ແລະ ອະນັດຕາ ເຫມືອນກັນກັບພວກເຮົາເຫລົ່າທ່ານທັງຫລາຍນີ້ເອງ.

ສຳລັບພວກເຮົາເຫລົ່າລູກຫລານຜູ້ທີ່ຍັງມືວເມົາຫມົກໄຫມ້ຢູ່ດ້ວຍກິເລດຕັນຫາ, ບໍ່ທັນລ່ວງລັດຕັດຂາດຈາກກອງທຸກ ແລະ ຍັງເປັນທາດທາສາຂອງກິເລດຕົວສຳຄັນຄື ໂລພະ ໂທສະ ໂມຫະ ເຊິ່ງປົກຄຸມຫຸ້ມຫໍ່ຈິດໃຈຢູ່ຢ່າງຫນາແຫນ້ນນີ້ ຍ່ອມມີຄວາມລະທົມທຸກ ໂທມະນັດ ໂສກເສົ້າເສຍໃຈ ອາໄລອາວອນຫາ ປູ່ຈານທອງ ຜູ້ທີ່ຈາກໄປໂດຍບໍ່ມີວັນຈະຫວນກັບຄືນມາໃຫ້ເຫັນຫນ້າອີກ. ແຕ່ເມື່ອຕັ້ງສະຕິໃຫ້ຫນ່ວງນັ້ນຄືງ ປົງອະນິດຈັງລົງ ໄປໃນກອງທຸກກອງສັງຂານແລ້ວ ກໍພໍສະດຸ້ງໃຈຄິດອອກວ່າ ເຖິງແມ່ນຈະ

ຮ້ອງໄຫ້ຮ່ຳໄຮສຸດແສນຈະທ່ວງຫາປູ່ຈານຫລາຍປານໃດກໍຕາມ ເພິ່ນກໍບໍ່ສາມາດທີ່ຈະສະດຸ້ງຕື່ນຂຶ້ນມາ ໃຫ້ພວກເຮົາໄດ້ຊື່ນຊົມດີໃຈແຕ່ຢ່າງໃດ. ມີຢູ່ສິ່ງດຽວທີ່ຈະຊ່ວຍແບ່ງເບົາຄວາມເສົ້າໂສກຄິດຮອດຄິດເຖິງເພິ່ນລົງໄດ້ກໍຄື : ລະນຶກຄຶດເຖິງ ຄຸນງາມຄວາມດີ, ຜົນງານ ແລະ ແບບແຜນຊີວິດອັນເປັນຕົວຢ່າງຈົບງາມຂອງເພິ່ນ ທີ່ເພິ່ນໄດ້ສ້າງໄວ້ໃນເມື່ອຍັງມີຊີວິດຢູ່ ເພາະວ່າ ຄຸນຄ່າແຫ່ງຄຸນງາມຄວາມດີຂອງເພິ່ນທໍ່ນັ້ນ ທີ່ຄົນຮຸ່ນຫລັງຈະໄດ້ເອີ່ຍອ້າງກ່າວເຖິງຕະຫລອດໄປ ແລະ ພ້ອມກັນນັ້ນກໍຈະໄດ້ສ້າງຄວາມດີສ້າງຜົນງານອັນເປັນປະໂຫຍດຕໍ່ຕົນເອງ, ຄອບຄົວ, ສັງຄົມ ແລະຕໍ່ປະເທດຊາດ ເພື່ອເປັນການຕອບບຸນແທນຄຸນສະໜອງເຈຕະນາລົມຂອງປູ່ຈານ ອັນເປັນການສະແດງອອກເຊິ່ງຄວາມ ກະຕັນຍູກະຕະເວທີ ທີ່ລູກຫລານຜູ້ຢູ່ພາຍຫລັງຄວນກະທຳຢ່າງຍິ່ງ.

ດັ່ງນັ້ນ ຂ້າພະເຈົ້າ ຜູ້ເປັນລູກບຸນທຳ ທີ່ໄດ້ຮູ້ຈັກ ແລະ ຄຸ້ນເຄີຍກັບຊີວິດປູ່ຈານມາແຕ່ຍາມຍັງນ້ອຍ ຈຶ່ງຂໍອະນຸຍາດກ່າວເຖິງປູ່ໃນຖານະເພິ່ນເປັນພໍ່ທີສອງ (ກ່ອນທີ່ພໍ່ທິດອ່ອນພໍ່ຂອງຂ້າພະເຈົ້າເອງຈະຈາກໂລກນີ້ໄປ ພໍ່ໄດ້ສັ່ງໄວ້ວ່າ ພາຍຫລັງພໍ່ບໍ່ຢູ່ແລ້ວ ໃຫ້ພວກລູກທັງຫລາຍ ພາກັນນັບຖື ແລະ ເຄົາລົບຮັກ ປູ່ຈານທອງ ຄືດັ່ງພໍ່ຂອງຕົນເອງຕໍ່ໄປ ພໍ່ໄດ້ບອກຄວາມຈິງຕື່ມອີກວ່າ ພໍ່ເປັນສ່ຽວຮັກ

ສ່ງວແພງ ກັບປູ່ຈານທອງ ພວກເພິ່ນທັງສອງເກີດປີດຽວກັນ ) ຂອງຂ້າພະເຈົ້າ ໂດຍຫຍໍ້ພໍໄດ້ໃຈຄວາມ ແລະ ເນື້ອຫາສາລະກ່ຽວກັບຄຸນສົມບັດທັດສະນະ ແລະ ການກະທຳອັນເຕັມໄປດ້ວຍຄວາມເສຍສະຫລະແລະມີປະໂຫຍດຂອງປູ່ຈານດັ່ງຕໍ່ໄປນີ້ :

ປູ່ຈານທອງ ເປັນຜູ້ເຖົ້າຫລັກບ້ານຫລັກເມືອງເປັນນັກປາດຂອງຊາວບ້ານ, ເປັນຫມໍຢາພື້ນເມືອງ ທີ່ຊາວບ້ານລູກຫລານ ແລະ ຍາດຕິພີ່ນ້ອງບ້ານອຸທຸມໃຫມ່ ກໍຄືບ້ານໃກ້ເຮືອນຄຽງ ໃຫ້ຄວາມເຄົາລົບນັບຖືຮັກແພງຢ່າງຍິ່ງ. ຄຸນສົມບັດ, ຄຸນຄວາມດີ ສິນທຳປະຈຳໃຈ ທີ່ສະທ້ອນອອກເປັນຜົນງານຝັງເລິກຢູ່ໃນຄວາມຊົງຈຳ ແລະ ເຫລືອໄວ້ເປັນອະນຸສອນໃນຈິດໃຈຂອງລູກຫລານຜູ້ຢູ່ພາຍຫລັງນັ້ນ ພໍສະຫລຸບໄດ້ດັ່ງນີ້ :

1. ປູ່ຈານທອງເປັນຄົນດີ ມີນ້ຳໃຈດຸຫມັ່ນຂະຫຍັນພຽນ, ສ້າງຢູ່ທຳກິນດ້ວຍເຫື່ອແຮງລຳແຄ່ງລຳຂາ ບົນເສັ້ນທາງແຫ່ງສິນທຳຄືຊື່ສັດ ສຸຈະລິດ ຮ່ວມແຮງຮ່ວມໃຈຢ່າງດີຍິ່ງ ກັບແມ່ຍ່າ ນາງຄູນ ແລະ ຕໍ່ມາກັບແມ່ການີ ເຮັດໃຫ້ຄອບຄົວຮົ່ມເຢັນເປັນສຸກຕະຫລອດມາ.

2. ມີສິນທຳປະຈຳໃຈ, ມີຄວາມຖະຫນອມທອມຮັກຮີດຄອງປະເພນີ ແລະ ວັດທະນະທຳອັນຈົບງາມ, ຊີວິດຂອງປູ່ມີຄວາມຜູກ

ພັນຢ່າງແນບແໜ້ນກັບວັດວາສາສະໜາ. ເປັນຜູ້ເຖົ້າ-ຜູ້ອາວຸໂສ ຜູ້ຊີງຄຸນນະວຸດທິ ທີ່ເວລາໃດກໍ ອອກໜ້າພາທາງໃນການສ້າງ ບຸນທຳທານ, ສ້າງວັດ, ກຸຕິວິຫານ ສິມ ທຳແຈກ ແລະ ອື່ນໆ ຕາມ ຄວາມອາດສາມາດ ແລະເງື່ອນໄຂຂໍ້ສະດວກຂອງບ້ານເມືອງ.

3. ປູ່ຈານທອງມີນ້ຳໃຈ ເມດຕາກະລຸນາຕໍ່ທຸກໆຄົນ, ເພິ່ນ ເປັນຄົນມີທ່າທີສະຫງ່າລາສີໜ້າເຄົາລົບນັບຖື, ມີອາທະສົນ ສັດ ຈະອາຈາພ້ອມດ້ວຍເຫດຜົນ ເຮັດໃຫ້ທຸກຄົນທີ່ພົບເຫັນເກີດ ຄວາມພໍອົກພໍໃຈ. ໃນຖານະທີ່ເພິ່ນເປັນໝໍຢາພື້ນເມືອງ ເພິ່ນຍິນ ດີເສຍສະຫລະເວລາສ່ວນຕົວຜົນປະໂຫຍດສ່ວນຕົວ ແລະ ຄອບ ຄົວ ໄປຊ່ວຍເຫລືອຊາວບ້ານຜູ້ທຸກຍາກຂາດເຂີນ ໃນຍາມທີ່ເຂົາ ເຈົ້າເຈັບໄຂ້ໄດ້ພະຍາດ : ເອີ້ນຄ່ຳກໍ່ຢ່ຳໄປ - ເອີ້ນຄືນກໍຕື່ນໄປ ໂດຍ ບໍ່ໄດ້ຄິດຄ່າຈ້າງລາງວັນ ຫລືຄາດຄ່າເງິນຄາຍຫລວງຫລາຍແນ່ ຢ່າງໃດ - ເຊິ່ງສຸດແລ້ວແຕ່ຄອບຄົວຜູ້ເຈັບປ່ວຍຈະມີສັດທາຕອບ ແທນ. ຫາກບໍ່ມີຫຍັງຕອບແທນປູ່ກໍບໍ່ວ່າຫຍັງຍິນດີຊ່ວຍເຫລືອສະ ເໝີ.

4. ປູ່ຈານເປັນຄົນກ້າຫານເດັດຂາດຜູ້ໜຶ່ງ ໃນບ້ານອຸທຸມ ໃໝ່ ໃນສະໄໝທີ່ປູ່ຍັງວ່ອງໄວຫ້າວຫັນສະກັນແກ່ນນັ້ນ ເກືອບ ຈະເວົ້າໄດ້ວ່າ ເພິ່ນເປັນຫລັກໄຊຂອງຊາວບ້ານກໍວ່າໄດ້. ເພິ່ນໄດ້

ອອກແຮງຮ່ວມກັບຊາວບ້ານປ້ອງກັນບ້ານປ້ອງກັນເມືອງ ປ້ອງກັນຄວາມສະຫງົບ - ສາມັກຄີພ້ອມພຽງກັນຂັບໄລ່ພວກໂຈນມານຄົນຂີ້ປຸ້ນຂີ້ລັກທີ່ມາຈາກບ້ານອື່ນເມືອງໄກໃຫ້ຕະເຫລີດເປີດເປີງໜີໄປ ດ້ວຍຄວາມຢ້ານກົວຕົວສັ່ນ. ອາດເວົ້າໄດ້ວ່າເພິ່ນເປັນຜູ້ໜຶ່ງທີ່ສືບທອດນ້ຳໃຈແຫ່ງວິລະກຳອັນອາດຫານກ້າແກ່ນຂອງເຈົ້າເມືອງອຸທຸມ ໃນໄລຍະຕໍ່ຕ້ານພວກລ່າເມືອງຂຶ້ນຝລັ່ງ.

5. ປູ່ຈານມີນ້ຳໃຈຮັກຊາດ, ຮັກບ້ານເກີດເມືອງນອນຢ່າງເລິກເຊິ່ງສົມຄວນ. ໃນຍາມຕໍ່ສູ້ກູ້ຊາດ ປູ່ກໍເປັນເຈົ້າກົກເຈົ້າເຫລົ່າຜູ້ໜຶ່ງທີ່ເປັນກຳລັງແຮງຂົນຂວາຍໂຄສະນາ ຫາສະບຽງອາຫານລຳລຽງຂົນສົ່ງ ໃຫ້ກຳລັງປະຕິວັດຢູ່ໃນທ້ອງຖິ່ນນັ້ນ. ເພິ່ນປຸກລະດົມສັ່ງສອນລູກຫລານ ໃຫ້ມີແນວຄິດກ້າຫານ, ຕັ້ງໜ້າສຶກສາຮ່ຳຮຽນທັງທາງໂລກ ແລະ ທາງທຳ ເພື່ອໃຫ້ກາຍເປັນຄົນຮູ້ຜູ້ມີປັນຍານຳເອົາວິຊາການ ມາສ້າງສາ ພັດທະນາປະເທດຊາດບ້ານເມືອງ.

ບັດນີ້ ພວກເຮົາເຫລົ່າລູກຫລານຊາວບ້ານຊາວເມືອງໄດ້ແຕ່ກ່າວຂານເອີ່ຍອ້າງ ແລະ ລະນຶກຄິດເຖິງຄຸນງາມຄວາມດີ, ສິນທຳປະຈຳໃຈ ແລະ ແບບແຜນດຳລົງຊີວິດອັນຈົບງາມຢູ່ໃນສິນກິນໃນທຳຂອງປູ່ ເພື່ອຍຶດຖືໄວ້ເປັນແວ່ນແຍງແລະຄະຕິເຕືອນໃຈໃນການຕໍ່ສູ້ຊີວິດ, ສ້າງຢູ່ທຳກິນ ປະພຶດປະຕິບັດຕົນ ໃຫ້ຖືກຕ້ອງ ສອດ

ຄ່ອງຕາມຫລັກສິນທຳຂອງພະພຸດທະສາສະໜາ ແລະ ແນວທາງນະໂຍບາຍອັນເປັນທຳຂອງພັກ ແລະ ລັດຖະບານແຫ່ງ ສ.ປ.ປ.ລາວ ຕໍ່ໄປ. ພວກລູກຫລານຍາມໃດກໍຍັງຈຳຝັງໃຈປູ່ສະເໝີວ່າ :

➪ ຮອຍຕີນປູ່ທີ່ຢຽບຢ່າງລົງແຜ່ນດິນບ້ານອຸທຸມໃໝ່ນີ້ ຍັງປະຮອຍເລິກໄວ້ຢ່າງບໍ່ລຶບລອກບໍ່ເລືອນລາງຈາງຈືດເພື່ອໃຫ້ລູກຫລານໄດ້ໄຕ່ຕາມ.

➪ ລາຍຝາມືທີ່ປູ່ກຳດ້າມພ້າດ້າມຈົກ ແລະ ງ້ອນໄຖ, ຮອຍຝາມືທີ່ປູ່ອຸທິດໄວ້ໃນການສ້າງວັດວາອາຮາມ, ເຮືອນຊານບ້ານຊ່ອງຍັງເປັນລາຍຮຸ່ງເຮືອງສ່ອງແສງຢູ່ໃນດວງໃຈ ແລະ ມີຊີວິດຊີວາຢູ່ໃນຄວາມຊົງຈຳ.

➪ ຄຳເວົ້າຄຳຄົມ ຄຳຄະຕິສັ່ງສອນ ທີ່ປູ່ຖ່າຍທອດໃຫ້ຍັງໝັ້ນຄົງຄົມແຫລມຢູ່ຢ່າງບໍ່ຄອນແຄນປ່ຽນແປງ.

➪ ນ້ຳໃຈແຫ່ງສິນທຳນ້ຳຕາແຫ່ງຄວາມເມດຕາກະລຸນາ ທີ່ປູ່ປູກໃສ່ດວງໃຈຂອງລູກ ແລະ ຊາວບ້ານອຸທຸມໃໝ່ ຍັງປົ່ງດອກອອກໃບ ໃຫ້ໝາກຜົນຢູ່ຕະຫລອດໄປ.

➪ ຄວາມວາດຫວັງຕັ້ງໃຈ ແລະ ຄວາມປາຖະໜາຂອງປູ່ທີ່ຢາກຈະເຫັນລູກຫລານ ໄດ້ສຶກສາຮ່ຳຮຽນມີຄວາມຮູ້ ມີປັນຍາ

ແລະ ວິຊາການເພື່ອນຳມາສ້າງສາພັດທະນາ ບ້ານເມືອງ ໄດ້ຄ່ອຍໆເກີດເປັນຄວາມຈິງມາເທື່ອລະກ້າວ.

➪ ມູນເຊື້ອນ້ຳໃຈຮັກຊາດ, ນ້ຳໃຈອົງອາດກ້າຫານທີ່ປູ່ປັ້ນຮູບແບບໄວ້ນັ້ນຍັງຈະຖືກພິມພາບຢູ່ໃນດວງໃຈ ແລະ ດວງຕາອັນແວວວາວສົດໃຈຂອງລູກຫລານຕໍ່ໄປ.

ໃນວາລະສຸດທ້າຍ ແຫ່ງຄຳກ່າວອຳລາ ດ້ວຍຄວາມອາໄລອາວອນ ສຸດແສນຈະຄິດຮອດຄິດເຖິງປູ່ນີ້ ພວກລູກຫລານ ຂໍປະຕິຍານຕໍ່ດວງວິນຍານຂອງປູ່ວ່າ ຈະສືບຕໍ່ກໍ່ສ້າງແຕ່ງຄຸນງາມຄວາມດີເປັນປະຊາຊົນພົນລະເມືອງດີຂອງປະເທດຊາດ, ຈະຕັ້ງໜ້າອອກແຮງເຮັດໜ້າທີ່ວຽກງານ ພັດທະນາຄອບຄົວບ້ານເມືອງ ແລະ ປະເທດຊາດໃຫ້ເກີດຜົນຕໍ່ໄປ ໃຫ້ສົມດັ່ງທີ່ປູ່ເຄີຍແນະນຳຕັກເຕືອນສັ່ງສອນໄວ້. ພວກລູກຫລານທັງໝົດຂໍນ້ອມຄາລະວະ ແລະ ຂໍກົ້ມຫົວໄວ້ອາໄລເຖິງດວງວິນຍານຂອງປູ່ຈານທອງ ເປັນຄັ້ງສຸດທ້າຍ ດ້ວຍຄວາມຫ່ວງຫາ ແລະ ໂທມະນັດໂສກເສົ້າລົ້ນຫົວໃຈ ຂໍອະທິຖານໃຫ້ດວງວິນຍານ ອັນບໍລິສຸດຂອງປູ່ຈົ່ງໄປສູ່ສຸຄະຕິພົບ ດ້ວຍເທີ້ນ !

# ກຸຫລາບປ່ຽນສີ
# ຊີວີສັ້ນສະຫລາຍ

**ດຣ.ທອງຄຳ ອ່ອນມະນີສອນ.**

❋ ງາມກຸຫລາບສະອາດເອ້ ງາມບໍ່ອີ່ມສະອອນສີ
ຍາມບີ່ແບເບີຍໄຂ ກີບໂສມສະຫງວນໄວ້
ເຜີ້ງພູ່ ພໍພະໄມ້ນ້ອມ ຖະຫນອມຫວງຫອມຮູບ
ບິນຈູບຈັບຈ່ອງນ້າວ ແນມໂນ້ມຫນ່ຽວບໍ່ວາງ

❋ ບໍ່ພໍສາມສີ່ມື້ ກໍມາຍຫມິ່ນຫມອງຫມາງ
ຈາງຈືດ ວີວອນຊຸ ຮ່ວງໂຮຍຮວງມ້ານ
ບານແບ່ງ ເບີຍສຸດຂັ້ນ ກໍຜັນແປແປງປ່ຽນ
ວຽນຫວັ່ນ ເຫີຍຫ່ຽວແຫ້ງ ຫາຍສິ້ນກິ່ນລະອອງ

❋ ຫມອງໃຈ ເມື່ອພົບພໍ້ ພໍຢາກລັດເລັ້ງສະກັດ
ອັດປະຕູຕັນທາງ ບໍ່ໃຫ້ຫອມເຫີຍຮ້າງ
ໃຜຫ່ອນ ວາງວົງລ້ອມ ຊອມຊິມຊວນຢູ່ ເປັນເດ
ນັບວັນ ຊຸໂຊ່ຍຂວັ້ນ ເຂີນກ້ານກິ່ງທະລາຍ

❊ ຫມາຍຢູ່ນານບໍ່ໄດ້ ໃນໂລກອະນິດຈັງ
ບໍ່ຈີລັງ ຍືນເຍືອ ບໍ່ຍືດຍາວໂຍງຍັ້ງ
ສຸດຮັກແຮງຢາກໂຈະຈັງ ກໍຫວັງດອມດາຍເປົ່າ
ຄືເງົາຍິນຍ່ອງຜ້າຍ ຜັນຍ້າຍ ຍ່າງບໍ່ທັນ ທັ້ນແລ້ວ

❊ ຊີວິດຄືນດັ່ງດ້າມ ໂດຍດອກດວງຫອມ
ກົ້ມກ່ອມ ຈັງຈອນເຈັບ ຈ່ອຍໂຊຊະລາເລື້ອຍ
ເປັນເມື່ອຍມືນເມົາໄຫມ້ ຫວັດໄອອົມພະຍາດ
ມັດຈຸລາດບີບຄັ້ນ ຄຸມຊັ້ງວຂົມໃຫ້ຕາຍ

❊ ຫນ້າຫນ່າຍສັງເວດໂອ້ ໂອຍອັ່ງມະໂນຫນັກ
ສັງບໍ່ທົນທານຫນຽວ ບໍ່ຫນ່ຽວເນີນນານຈັ້ງ
ສັງບໍ່ອະມະຕະຫມັ້ນ ນິລັນຄົງຄອງຕະຫລອດ
ໄຟລຸກກັບມອດມ້ອຍ ມົວຖົ້ມເຖົ່າຢູ່ດິນ ນີ້ນໍ

❊ ປູ່ຈານທອງ ເພິ່ນສິ້ນ ເສຍລ່ວງລາຫນີ ໄປແລ້ວ
ມີແຕ່ນາມຍືນຍັງ ຍື່ນເຍືອງແຍງໄວ້
ຮ່າງກາຍບັນໄລສັ່ງງ ອະນິດຈັງຈັ້ງບໍ່ທ່ຽງ
ກຸສິນຄຽງແຈ່ມເຈົ້າ ເນົາຍັ້ງຕະຫລອດໄປ

❈ ເຫລືອແຕ່ອະດີດໄວ້ ໃນພາບຄວາມຫລັງ
ຜົນງານ ຍັງເຍືອຍາວ ບໍ່ເຍື່ອຍພັງເພມ້າງ
ວາງແກ່ ຄົນພາຍຊ້ອຍ ຊວນຊົມເຊີຍໄຕ່
ໄປຕາມຮອຍຮ່ອງເສັ້ນ ສາຍເຊື້ອບໍ່ເສື່ອມສີ

❈ ຜົນງານດີຍອດຢ້ຽມ ຄຸນຄ່າຄົງສະຖຽນ ທ່ານເອີຍ
ປາກຽນເນົານິລັນດອນ ບໍ່ໂຄ່ນຄອນຄູນຄ້ຳ
ອະນຸຊົນຊີຈິດຈ້ຳ ປະຫວັດຄຳຄະນິງຮອດ
ຢອດນ້ຳຕາຫລັ່ງໃຫ້ ສຸດສາຍໃຈຜູກຫມັ້ນ
ນິລັນກ້ຽວກິ່ງມະໂນ ແນ່ແລ້ວ

ວຽງຈັນ, ວັນທີ 2 ທັນວາ 1999

ພິມທີ່ວິສາຫະກິດ ໂຮງພິມສຶກສາ